# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ມີນາ 2024

ປີທີ 13 ສະບັບທີ 960

ລາຍສັບປະດາ


## ລະດົມຄວາມຄິດເຫັນໃສ່ບົດຄົ້ນຄວ້າວິທະຍາສາດ




(ສພຊ) ເພື່ອລະດົມຄວາມຄິດເຫັນໃນການປັບປຸງເນື້ອໃນບົດຄົ້ນຄວ້າວິທະຍາສາດຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ສຳລັບການຝຶກອົບຮົມ, ການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ(ສສຊ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແລະ ພະນັກງານທີ່ເປັນເສນາທິການ; ເພື່ອເຮັດໃຫ້ບົດຄົ້ນຄວ້າວິທະຍາສາດຮັບປະກັນຄວາມຖືກຕ້ອງ, ຄົບຖ້ວນ, ສົມບູນ, ມີຫຼັກວິທະຍາສາດ, ສອດຄ່ອງກັບສະພາບຄວາມເປັນຈິງຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທັງເປັນການເອົາຂໍ້ມູນຕ່າງໆຈາກການປະກອບ ຄຳຄິດຄຳເຫັນ ໄປຄົ້ນຄວ້າປະກອບໃສ່ບັນດາເນື້ອໃນບົດຄົ້ນຄວ້າວິທະຍາສາດໃຫ້ມີຜົນສຳເລັດ. ລະຫວ່າງວັນທີ

ອ່ານຕໍ່ໜ້າ 4

## ເຜີຍແຜ່ຄຳແນະນຳ ຄປຈສພຊ ແລະ ຄປຈສພຂ



(ສພຊ) ຕອນບ່າຍຂອງວັນພຸດ, ວັນທີ 21 ກຸມພາ 2024 ທີ່ສະໂມສອນພະແນກສຶກສາທິການແລະກິລາແຂວງ, ສະພາປະຊາຊົນແຂວງໄຊຍະບູລີ ໄດ້ຈັດກອງປະຊຸມເຜີຍແຜ່ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ແລະ ຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ພາຍໃຕ້ການເປັນປະທານຂອງທ່ານ ເພັງນີລັນ ຄຳພັນເພັງ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ໂດຍ

ອ່ານຕໍ່ໜ້າ 3

## ຮອງປະທານສະພາແຫ່ງຊາດ ຢ້ຽມຢາມ ໂຄງການຊ່ວຍເຫຼືອການປູກຝັງລ້ຽງສັດຢູ່ເມືອງນາກາຍ



ອ່ານຕໍ່ໜ້າ 4

## ຮອງປະທານ ສພຊ ພົບປະຢ້ຽມຢາມປະຊາຊົນບ້ານບໍ່ສ້ານ

(ສພຊ) ໃນວັນທີ 24 ກຸມພາ2024ທ່ານພົທ.ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ຮ່ວມກັບທ່ານ ເພັງນີລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງໄຊຍະບູລີ ແລະ ຄະນະຕິດຕາມ ໄດ້ລົງເຄື່ອນໄຫວພົບປະຢ້ຽມຢາມພໍ່ແມ່ປະຊາຊົນຢູ່ສະໂມສອນບ້ານບໍ່ສ້ານ ເມືອງບໍ່ແຕນ ແຂວງໄຊຍະບູລີ, ໂດຍການນຳພາຂອງທ່ານ ສົມສະໜຸກ ໄຊອຸດົມ ກຳມະການພັກແຂວງ, ເຈົ້າເມືອງໆບໍ່ແຕນ ພ້ອມດ້ວຍຄະນະ.



ໂອກາດດັ່ງກ່າວ ທ່ານ ບຸນທຽບ ຄຳສີ ນາຍບ້ານໆບໍ່ສ້ານ ໄດ້ລາຍງານກ່ຽວກັບສະພາບການໂດຍຫຍໍ້ຂອງບ້ານ ພ້ອມທັງສະເໜີຂໍງົບປະມານຈຳນວນໜຶ່ງເພື່ອຂະຫຍາຍສາຍນ້ຳລິນ, ບຳລຸງຮັກສານ້ຳລິນ ໃຫ້ພຽງພໍຕໍ່ການນຳໃຊ້

ອ່ານຕໍ່ໜ້າ 3

## ສຳເລັດເຝິກອົບຮົມວຽກງານວິເຄາະ, ພັດທະນາການຈັດຕັ້ງ ແລະ ການຄຸ້ມຄອງບຸກຄະລາກອນ



(ສພຊ) ພາຍຫຼັງດຳເນີນມາເປັນເວລາ 4 ວັນ, ໃນວັນທີ 23 ກຸມພາ 2024 ຊຸດເຝິກອົບຮົມວຽກງານວິເຄາະ, ພັດທະນາການຈັດຕັ້ງ ແລະ ການຄຸ້ມຄອງບຸກຄະລາກອນໃຫ້ແກ່ພະນັກງານ-ລັດຖະກອນຂອງກົມຈັດຕັ້ງ-ພະນັກງານ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) 9 ແຂວງຄື: ນະຄອນຫຼວງວຽງຈັນ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ທີ່ຫ້ອງວ່າການແຂວງຈຳປາສັກ ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ; ເຂົ້າຮ່ວມມີຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານ-ລັດຖະກອນຂອງກົມຈັດຕັ້ງ-ພະນັກງານ, ເລຂາທິການ-ຮອງເລຂາທິການ ແລະ ພະນັກງານທີ່ຮັບຜິດຊອບວຽກງານຈັດຕັ້ງ-ພະນັກງານຂອງຄະນະເລຂາທິການ ສພຂ 9 ແຂວງ ພ້ອມດ້ວຍວິທະຍາກອນຈາກກະຊວງພາຍໃນ.

ອ່ານຕໍ່ໜ້າ 4

## ກຳມະບານສະພາແຫ່ງຊາດ ສະຫຼຸບການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ

(ສພຊ) ໃນຕອນເຊົ້າຂອງວັນທີ 27 ກຸມພາ 2024, ສະຫະພັນກຳມະບານສະພາແຫ່ງຊາດ ໄດ້ຈັດກອງປະຊຸມເຜີຍແຜ່ມູນເຊື້ອວັນສ້າງຕັ້ງອົງການຈັດຕັ້ງກຳມະບານລາວຄົບຮອບ 68 ປີ (1 ກຸມພາ 1956-1 ກຸມພາ 2024) ແລະ ສະຫຼຸບການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024 ໂດຍການເປັນປະທານຮ່ວມຂອງສະຫາຍຣສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ຄະນະປະຈຳພັກ, ຜູ້ຊີ້ນຳອົງການຈັດຕັ້ງມະຫາຊົນສະພາແຫ່ງຊາດ; ສະຫາຍ ພອນສານ ວິໄລເມັ້ງ ຮອງປະທານຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ (ສກລ) ແລະສະຫາຍ



ອຳໄພ ຈິດມານົບ ຄະນະບໍລິຫານງານ ສກລ, ປະທານຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ.

ກອງປະຊຸມໄດ້ເຜີຍແຜ່ມູນເຊື້ອວັນສ້າງຕັ້ງກຳມະບານລາວ ຄົບຮອບ 68 ປີ, ເຊື່ອມຊຶມເອກະສານແນວຄິດຊີ້ນຳຂອງສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກ່ຽວກັບ "ເສດຖະກິດເອກະລາດເປັນເຈົ້າຕົນເອງ", ຜ່ານບົດສະຫຼຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2023 ແລະທິດທາງແຜນການເຄື່ອນໄຫວປະຈຳປີ 2024 ຂອງສະຫະພັນກຳມະບານສະພາແຫ່ງຊາດ, ຜ່ານຂໍ້ຕົກລົງຂອງສູນກາງສະຫະພັນກຳມະບານລາວ ກ່ຽວກັບການຍັ້ງຢືນ 5 ເປັນເຈົ້າ ແລະ ຂໍ້ຕົກລົງຂອງຄະນະພັກສະພາແຫ່ງຊາດກ່ຽວ

ອ່ານຕໍ່ໜ້າ 4



ໄມ້ລຳດຽວອ້ອມຮົ້ວບໍ່ໄດ່... (ໜ້າ 9)


ຄຸນປະໂຫຍດຂອງ... (ໜ້າ 10)


ສະພາແຫ່ງຊາດ... (ໜ້າ 11)


ມາດຕະການຄຸ້ມຄອງ... (ໜ້າ 12)


## ຊົມເຊີຍວັນແມ່ຍິງສາກົນ ຄົບຮອບ 104 ປີ (08/03/1910-08/03/2024) ຢ່າງສຸດໃຈ!

## ສອງກຳມາທິການສະພາແຫ່ງຊາດ ລາວ-ກຳປູເຈຍ ແລກປ່ຽນບົດຮຽນ

(ສພຊ) ໃນລະຫວ່າງວັນທີ 25-29 ກຸມພາ 2024 ຄະນະຜູ້ແທນສະພາແຫ່ງຊາດ ສປປ ລາວ ນຳໂດຍທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ (ກບຜ) ໄດ້ໄປຢ້ຽມຢາມ ແລະ ແລກປ່ຽນບົດຮຽນ ຢູ່ລາຊະອານາຈັກກຳປູເຈຍ ກັບ ກຳມາທິການສຶກສາອົບຮົມ, ຊາວໜຸ່ມ, ກິລາ, ສາສະໜາ, ວັດທະນະທຳ, ສິລະປະ ແລະທ່ອງທ່ຽວສະພາແຫ່ງຊາດກຳປູເຈຍ ກ່ຽວກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສອງກຳມາທິການ.



ໃນໂອກາດດັ່ງກ່າວ ຄະນະໄດ້ເຂົ້າຢ້ຽມຂໍ່ານັບທ່ານກິດຕິເສດຖາບັນດິດ ຈຽມຢຽບ ຮອງປະທານສະພາແຫ່ງຊາດກຳປູເຈຍ ຜູ້ທີ 1 ແລະ ພົບປະສອງຝ່າຍກັບທ່ານ ປາ ໂສຈຽດຕິວົງ ປະທານກຳມາທິການສຶກສາອົບຮົມ, ຊາວໜຸ່ມ, ກິລາ, ສາສະໜາ, ວັດທະນະທຳ, ສິລະປະ ແລະ ທ່ອງທ່ຽວ; ໃນການພົບປະ, ສອງຝ່າຍໄດ້ແຈ້ງທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ໃນການຕິດຕາມກວດກາກະຊວງ-ອົງການກ່ຽວຂ້ອງ ໃຫ້ກັນແລະກັນຊາບພ້ອມທັງໄດ້ແລກປ່ຽນບົດຮຽນແລະຮັບຟັງການລາຍງານໂດຍຫຍໍ້ສະພາບພົ້ນເດັ່ນການປະຕິບັດໜ້າທີ່ຂອງສອງອົງການນິຕິບັນຍັດ ແລະ ສອງກຳມາທິການໃນໄລຍະຜ່ານມາ ເປັນຕົ້ນການສ້າງກົດໝາຍ ແລະນິຕິກຳໃຕ້ກົດໝາຍ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຢູ່ເຂດຫ່າງໄກສອກຫຼີກ, ບົດຮຽນການຄຸ້ມຄອງວຽກງານສາສະໜາ, ການປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊົນເຜົ່າ ຕິດພັນກັບການສົ່ງເສີມວຽກງານການທ່ອງທ່ຽວ, ປຶກສາຫາລືການສືບຕໍ່ພົວພັນຮ່ວມມືລະຫວ່າງສອງກຳມາທິການໃນຕໍ່ໜ້າ.

ນອກຈາກນີ້, ຄະນະຜູ້ແທນ ກບຜ ຍັງໄດ້ລົງເຄື່ອນໄຫວຢ້ຽມຊົມພະລາຊະວັງເຈົ້າຊີວິດ, ວັດພະນົມ, ແຫຼ່ງທ່ອງທ່ຽວທາງດ້ານວັດທະນະທຳ, ສາສະໜາ ແລະ ພື້ນຖານເສດຖະກິດຈຳນວນໜຶ່ງ ເຊັ່ນ: ທ່າກຳປັ່ນປົກຄອງຕົນເອງ ສີຫານຸວິນ ແລະບໍລິສັດ ອັງກໍເບຍ ຕື່ມອີກ.



## ກອງປະຊຸມຄະນະບໍລິຫານງານ ແລະ ກອງປະຊຸມຄົບຄະນະ ຂອງ APA ຄັ້ງທີ 14




(ສພຊ) ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ໄດ້ເຂົ້າຮ່ວມກອງປະຊຸມຄະນະບໍລິຫານງານ ແລະ ກອງປະຊຸມຄົບຄະນະຂອງສະມັດຊາລັດຖະສະພາອາຊີ (APA) ຄັ້ງທີ 14 ເຊິ່ງຈັດຂຶ້ນທີ່ນະຄອນຫຼວງບາກູ, ປະເທດອາແຊກໄບຊານ ໃນລະຫວ່າງວັນທີ 20-24 ກຸມພາ 2024 ໂດຍມີຄະນະຜູ້ແທນເຂົ້າຮ່ວມທັງໝົດ 300 ທ່ານ ທີ່ມາຈາກ 23 ປະເທດ ໃນນີ້, ຄະນະຜູ້ແທນນຳໂດຍປະທານລັດຖະສະພາ 7 ປະເທດ, ຮອງປະທານລັດຖະສະພາ 6 ປະເທດ ພ້ອມທັງຜູ້ຕາງໜ້າຈາກສະມາຊິກລັດຖະສະພາປະເທດສັງເກດການ 2 ປະເທດ ແລະ ອົງການຈັດຕັ້ງສັງເກດການ 6 ອົງການ.

ກອງປະຊຸມຄັ້ງນີ້, ຄະນະຜູ້ແທນທີ່ເຂົ້າຮ່ວມ ໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນພາຍໃຕ້ຫົວຂໍ້ "ຊຸກຍູ້ການຮ່ວມມືໃນພາກພື້ນເພື່ອການພັດທະນາແບບຍືນຍົງໃນອາຊີ" ພ້ອມທັງຄົ້ນຄວ້າແລະປະກອບຄຳເຫັນຕໍ່ບັນດາຮ່າງມະຕິທີ່ສະເໜີໃນກອງປະຊຸມຄະນະກຳມະການຕ່າງໆຂອງສະມັດຊາລັດຖະສະພາອາຊີເຊັ່ນ: ກອງປະຊຸມຄະນະກຳມະການການເມືອງ, ຄະນະກຳມະການເສດຖະກິດ ແລະ ການພັດທະນາແບບຍືນຍົງ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ຄະນະກຳມະການງົບປະມານ ແລະ ແຜນການ.

ຜູ້ແທນສະພາແຫ່ງຊາດລາວໄດ້ມີຄຳເຫັນໃນວາລະກອງປະຊຸມຄົບຄະນະຄັ້ງທີI ໂດຍໄດ້ຍົກໃຫ້ເຫັນສິ່ງທ້າທາຍຫຼາຍດ້ານທີ່ສົ່ງຜົນກະທົບຕໍ່ສະຖຽນລະພາບ ແລະຄວາມໝັ້ນຄົງໃນພາກພື້ນ ກໍຄືໃນໂລກ ເປັນຕົ້ນແມ່ນໄພທຳມະຊາດ, ການປະທະກັນທາງດ້ານອາວຸດໃນພາກພື້ນ, ບັນຫາດ້ານການເງິນ, ອາຫານ, ພະລັງງານ; ພ້ອມດຽວກັນນັ້ນ ຄະນະຜູ້ແທນລາວ ກໍໄດ້ຍົກໃຫ້ເຫັນເຖິງນະໂຍບາຍການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະການຮ່ວມມື ຂອງ ສປປລາວ ແລະ ບົດບາດຂອງສະພາແຫ່ງຊາດລາວ ໃນນາມເປັນຕົວແທນແຫ່ງສິດ, ຜົນປະໂຫຍດ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊົນລາວບັນດາເຜົ່າເຊິ່ງເປັນການປະກອບສ່ວນທີ່ສຳຄັນໃນການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ສັນຕິພາບ, ການຮ່ວມມື, ການເຊື່ອມໂຍງ ແລະ ການພັດທະນາເສດຖະກິດ-ສັງຄົມ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ.

ຄະນະຜູ້ແທນລາວ ຍັງໄດ້ຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມກອງປະຊຸມໃນຖານະທີ່ເປັນສະມາຊິກລັດຖະສະພາອາຊີ ຕ້ອງຖືເອົາໂອກາດກອງປະຊຸມຄົບຄະນະຄັ້ງທີ 14 ຂອງ APA ເປັນເວທີເພື່ອເສີມຂະຫຍາຍບົດບາດນິຕິບັນຍັດໃນການຊຸກຍູ້ສັນຕິພາບ, ຄວາມໝັ້ນຄົງ ແລະ ຄວາມຈະເລີນຮຸ່ງເຮືອງຢູ່ພາກພື້ນ, ຊຸກຍູ້ຄວາມໄວ້ເນື້ອເຊື່ອໃຈ, ການຮ່ວມມື ແລະ ການຊ່ວຍເຫຼືອເຊິ່ງກັນ ແລະກັນຕາມກົນໄກບົດບາດຂອງລັດຖະສະພາ ເພື່ອຮັບມືກັບສິ່ງທ້າທາຍ ແລະ ແກ້ໄຂບັນຫາພາກພື້ນ ແລະ ສາກົນ.

ພິເສດ, ໃນກອງປະຊຸມຄັ້ງນີ້ ຄະນະຜູ້ແທນລາວໄດ້ແຈ້ງໃຫ້ບັນດາປະເທດສະມາຊິກ APA ຮັບຊາບວ່າ ໃນປີ 2024 ສະພາແຫ່ງຊາດລາວເປັນປະທານສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ສະພາແຫ່ງຊາດລາວ ມີຄວາມມຸ່ງໝັ້ນທີ່ຈະເຮັດໜ້າທີ່ການທູດລັດຖະສະພາ ເສີມຂະຫຍາຍການຮ່ວມມືພາຍໃນອາຊຽນ ແລະ ສາກົນ ເພື່ອສັນຕິພາບ, ຄວາມໝັ້ນຄົງ ແລະ ການພັດທະນາໃນພາກພື້ນແລະໃນໂລກ.




*# ຄັດໂດຍ: ຫອມສະນິດ*

*❐ 1 ປີຜ່ານມາ, ນະຄອນຫຼວງວຽງຈັນ ມີອຸບັດເຫດເກີດຂຶ້ນ 1.191 ລາຍ, ພາຫະນະເປ່ເພເລັກໜ້ອຍ 693 ຄັນ,ເປ່ເພສົມຄວນ 1.588 ຄັນ, ໃຊ້ການບໍ່ໄດ້ 21 ຄັນ, ຄົນໄດ້ຮັບບາດເຈັບເລັກໜ້ອຍ 339 ຄົນ, ເຈັບສົມຄວນ 692 ຄົນ, ເຈັບສາຫັດ 340 ຄົນ ແລະ ເສຍຊີວິດ 161 ຄົນ ໂດຍສາເຫດຫຼັກສ່ວນຫຼາຍແມ່ນບໍ່ປະຕິບັດກົດລະບຽບຈະລາຈອນ ເຊັ່ນ: ຂັບຂີ່ລົດໄວ ແຊງບໍ່ຮັບປະກັນ, ປ່ຽນທິດທາງກະທັນຫັນ, ບໍ່ຮັກສາໄລຍະຫ່າງ, ຂ້າມທາງບໍ່ຮັບປະກັນ ອາຍຸບໍ່ເຖິງກະສຽນ, ດື່ມສິ່ງມຶນເມົາແລ້ວຂັບ ແລະ ອື່ນໆ.*

***ໜສພ. ວຽງຈັນໃໝ່ 19/02/2024***

*❐ ລັດວິສາຫະກິດການບິນລາວ ກຽມເປີດຖ້ຽວບິນຄືນໃໝ່ ເສັ້ນບິນລະຫວ່າງສະຫວັນນະເຂດ-ບາງກອກ ເຊິ່ງຈະເລີ່ມບິນຕັ້ງແຕ່ວັນທີ 15 ມີນານີ້ເປັນຕົ້ນໄປ ໃນເບື້ອງຕົ້ນຈະບິນ 3 ຖ້ຽວຕໍ່ອາທິດ ຄື: ວັນຈັນ, ວັນພຸດ ແລະ ວັນສຸກ ໂດຍຈະບິນຂຶ້ນຈາກສະຫວັນນະເຂດ ແຫ່ງ ສປປ ລາວ ໃນເວລາ 10:40 ແລະ ຈະຮອດບາງກອກ ປະເທດໄທ ເວລາ 12:10 ແລະ ບິນກັບຈາກບາງກອກ ໃນເວລາ 13:10 ມາຮອດສະຫວັນນະເຂດໃນເວລາ 14:40 ເຊິ່ງໃຊ້ເວລາ 1 ຊົ່ວໂມງ 30 ນາທີ ໂດຍນຳໃຊ້ເຮືອບິນ ATR-72 ຄາດວ່າໃນອະນາຄົດຖ້າມີຄວາມຕ້ອງການຫຼາຍຂຶ້ນອາດຈະເພີ່ມຖ້ຽວບິນຕື່ມອີກ.*

***ໜສພ. ປະເທດລາວ 19/02/2024***

*❐ ໃນ 1 ປີຜ່ານມາ, ວຽກງານຈົດທະບຽນການເກີດ ສາມາດຢັ້ງຢືນການເກີດໃຫ້ເດັກເກີດໃໝ່ທົ່ວນະຄອນຫຼວງວຽງຈັນ ໄດ້ 11.573 ຄົນ ຍິງ 6.324 ຄົນ ຈົດທະບຽນໃບຢັ້ງຢືນການເສຍຊີວິດ ໄດ້ 2.248 ຄົນ ຍິງ 915 ຄົນ ຈົດທະບຽນໃບຢັ້ງຢືນການປ່ຽນຊື່ໄດ້ 484 ຄົນ ຍິງ 242 ຄົນ ແລະ ຈົດທະບຽນຢັ້ງຢືນຂໍປ່ຽນນາມສະກຸນໄດ້ 2.122 ຄົນ ຍິງ 1.131 ຄົນ.*

***ໜສພ. ວຽງຈັນໃໝ່ 20/02/2024***

*❐ ໃນໄລຍະ 2023 ວຽກງານປຸກລະດົມການບໍລິຈາກເລືອດ ແລະ ຕອບສະໜອງເລືອດທີ່ປອດໄພ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຢ່າງຕັ້ງໜ້າຮ່ວມກັບການຈັດຕັ້ງຂັ້ນຕ່າງໆໃນທົ່ວປະເທດ ໂດຍໃຫ້ການປະກອບສ່ວນໃນການປຸກລະດົມບໍລິຈາກເລືອດຢ່າງເປັນຂະບວນຟົດຟື້ນ ໃນປີ 2023 ສະພາແຫ່ງຊາດຮັບຮອງຕາມແຜນການຕ້ອງ ໃຫ້ບັນລຸ 73.000 ຖົງ ສາມາດປະຕິບັດ 73.023 ຖົງ ຖືວ່າປະຕິບັດໄດ້ 100% ລື່ນແຜນການ 23 ຖົງເລືອດ ທຸກຖົງໄດ້ຮັບການກວດວິເຄາະຢ່າງເປັນລະບົບ ສາມາດແຍກສ່ວນປະກອບຂອງເລືອດ ແລະ ຕອບສະໜອງເລືອດໃຫ້ແກ່ຄົນເຈັບໄດ້ 78.446 ຖົງ ແລະ ມີຄົນເຈັບຈຳນວນ 57.491 ຄົນ ໄດ້ຮັບຜົນປະໂຫຍດ. ສຳລັບປີ 2024 ຕາມແຜນການ ແລະ ຄາດໝາຍສູ້ຊົນ ທີ່ສະພາແຫ່ງຊາດຮັບຮອງ ໃນທົ່ວປະເທດຕ້ອງໃຫ້ບັນລຸ 78.000 ຖົງ ໃນນີ້, ສູນກາງ (ກະຊວງອົງການ ແລະ ນະຄອນຫຼວງວຽງຈັນ) ຕ້ອງບັນລຸ 33.300 ຖົງ ແລະ ທ້ອງຖິ່ນ 44.700 ຖົງ ປີ 2025 ຕ້ອງໃຫ້ບັນລຸ 80.400 ຖົງ ແລະ ຮອດປີ 2030 ຕ້ອງໃຫ້ບັນລຸ 120.000 ຖົງ.*

***ໜສພ. ວຽງຈັນໃໝ່ 27/02/2024***

# ກອງປະຊຸມໃຫຍ່ໜ່ວຍຊາວໜຸ່ມຮາກຖານ ກຳມາທິການກົດໝາຍ ຄັ້ງທີ II



(ສພຊ) ກອງປະຊຸມໃຫຍ່ໜ່ວຍຊາວໜຸ່ມຮາກຖານກຳມາທິການກົດໝາຍ ຊຸດທີ II ໄດ້ຈັດຂຶ້ນໃນຕອນບ່າຍຂອງວັນທີ 26 ກຸມພາ 2024 ທີ່ສະພາແຫ່ງຊາດ ໂດຍການເປັນປະທານຮ່ວມຂອງສະຫາຍ ອຳໄພ ຈິດມານິນ ກຳມະການຄະນະພັກສະພາແຫ່ງຊາດ, ຮອງເລຂາໜ່ວຍພັກຮາກຖານກຳມາທິການກົດໝາຍ, ສະຫາຍ ພອນແກ້ວ ຕົ້ນວໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ບຸນຍູ້ ອຸດົມເພັດ ເລຂາໜ່ວຍຊາວໜຸ່ມຮາກຖານກຳມາທິການກົດໝາຍ (ຜູ້ເກົ່າ); ມີບັນດາສະຫາຍຕາງໜ້າຈາກອົງການກຳມະບານ, ແມ່ຍິງໜ່ວຍຮາກຖານກຳມາທິການກົດໝາຍ, ໜ່ວຍຮາກຖານພາຍໃນສະພາແຫ່ງຊາດ ແລະ ສະມາຊິກຊາວໜຸ່ມຮາກຖານກຳມາທິການກົດໝາຍ ລວມທັງໝົດ 29 ສະຫາຍ ຍິງ 12 ສະຫາຍ.

ກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານການເມືອງ ແລະ ບົດສຳຫຼວດການນຳພາຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການກົດໝາຍ; ຈາກນັ້ນ, ໄດ້ເປັນເອກະພາບພິຈາລະນາ, ຮັບຮອງເອົາບັນດາເນື້ອໃນສຳຄັນຄື: ເຫັນດີ ແລະ ຮັບຮອງເອົາບົດລາຍງານການເມືອງ ທີ່ສະເໜີໂດຍ ສະຫາຍ ກໍຢ່າ ຢົງກາຍ ຮອງເລຂາໜ່ວຍຊາວໜຸ່ມຮາກຖານກຳມາທິການກົດໝາຍ ເຊິ່ງເນື້ອໃນລາຍງານການເມືອງດັ່ງກ່າວ ໄດ້ຕີລາຄາດ້ານດີ, ດ້ານອ່ອນ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້ ຕະຫຼອດການເຄື່ອນໄຫວວຽກງານຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການກົດໝາຍຄັ້ງທີI; ພ້ອມກັນນັ້ນ, ກອງປະຊຸມເອກະພາບສູງຮັບຮອງເອົາແຜນການເຄື່ອນໄຫວແຕ່ນີ້ຮອດປີ 2030. ເຫັນດີ ແລະ ເປັນເອກະພາບກັບບົດລາຍງານການເມືອງ, ບົດສຳຫຼວດການນຳພາຂອງຄະນະໜ່ວຍຊາວໜຸ່ມ ຊຸດທີ I ຕາມການສະເໜີຂອງສະ ຫາຍເລຂາໜ່ວຍຊາວໜຸ່ມຮາກຖານກຳມາທິການກົດໝາຍທີ່ໄດ້ລາຍງານ ແລະ ຢ້ຳຄືນຜົນສຳເລັດຂອງການນຳພາວຽກງານຊາວໜຸ່ມທີ່ຕິດພັນກັບວຽກງານວິຊາສະເພາະໃນແຕ່ລະດ້ານ ທັງເປັນການຖອດຖອນບົດຮຽນເພື່ອບ່ອນອີງໃຫ້ແກ່ຄະນະໜ່ວຍຊາວໜຸ່ມຮາກຖານກຳມາທິການກົດໝາຍ ຊຸດທີ II ນຳໄປຈັດຕັ້ງປະຕິບັດ ແລະ ປັບປຸງແກ້ໄຂບັນດາຂໍ້ ຄົງຄ້າງທີ່ຍັງຕ້ອງສືບຕໍ່ປະຕິບັດ.

ຈາກນັ້ນ, ຜູ້ແທນກອງປະຊຸມໃຫຍ່ຄັ້ງທີ II ໄດ້ພ້ອມກັນໃຊ້ສິດຂອງຕົນໃນການປ່ອນບັດເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຮາກຖານກຳມາທິການກົດໝາຍ ຊຸດທີ II ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ທັງສອດຄ່ອງກັບມາດຕະຖານຕາມທີ່ໄດ້ກຳນົດໄວ້ ເຊິ່ງມີຜູ້ອອກຮັບສະໝັກເລືອກຕັ້ງທັງໝົດ 5 ສະຫາຍ ຍິງ 1 ສະຫາຍ, ເລືອກເອົາ 3 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະໜ່ວຍຊາວໜຸ່ມຮາກຖານກຳມາທິການກົດໝາຍ ຊຸດທີ II ໄດ້ເປັນເອກະພາບເລືອກເອົາສະຫາຍ ບຸນລົ້ນ ສໍລາດຈຳປາ ເປັນເລຂາ, ສະຫາຍ ນາງ ອາພາພອນ ເພັງທາ ເປັນຮອງເລຂາ ທັງເປັນປະທານກວດກາ, ສະຫາຍ ເຕັ້ງວ່າງ ໜາວຣືວ ເປັນກຳມະການ.

ໃນໂອກາດນີ້, ສະຫາຍ ອຳໄພ ຈິດມານິນ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ໂດຍໄດ້ເນັ້ນໃຫ້ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ພ້ອມສະມາຊິກຊາວໜຸ່ມພາຍໃນໜ່ວຍທັງໝົດ ເອົາໃຈໃສ່ບາງບັນຫາທີ່ສຳຄັນ ເຊັ່ນກອງປະຊຸມໃຫຍ່ຄັ້ງນີ້ແມ່ນມີຄວາມໝາຍສຳຄັນທີ່ສຸດ, ເປັນການສືບຕໍ່ຮັດແໜ້ນຄວາມສາມັກຄີພາຍໃນສະມາຊິກຊາວໜຸ່ມ ທັງເປັນການເຕົ້າໂຮມກຳລັງແຮງທາງດ້ານສະຕິປັນຍາ, ກຳລັງກາຍ ແລະ ກຳລັງໃຈຂອງຊາວໜຸ່ມ ເພື່ອສືບຕໍ່ພາລະກິດປ່ຽນແປງໃໝ່ ນຳເອົາປະເທດຊາດໃຫ້ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ແລະ ກ້າວຂຶ້ນຕາມຈຸດໝາຍສັງຄົມນິຍົມ ທີ່ພັກປະຊາຊົນປະຕິວັດລາວ ໄດ້ກຳນົດເອົາໄວ້ ທັງເປັນການສືບທອດພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຢ່າງບໍ່ຢຸດຢັ້ງ.

**(ນາງ ໄຊໂສພາພອນ ມົ່ງມຸງຄຸນ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

ແລະ ສະເໜີລັດຖະບານ ປູຢາງແຕ່ທາງແຍກບໍ່ແຕນ ຮອດດ່ານປະເພນີເໜືອງແພ່.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນໂອລົມຕໍ່ພໍ່ແມ່ປະຊາຊົນບ້ານບໍ່ສ້ານ ໂດຍໄດ້ຕາງໜ້າໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ກ່າວສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄວາມພິລະອາດຫານຂອງພໍ່ແມ່ປະຊາຊົນບ້ານບໍ່ສ້ານ ທີ່ໄລຍະໃດກໍສະແດງນ້ຳໃຈຮັກຊາດຮັກຜືນແຜ່ນດິນລາວແຫ່ງນີ້ເຊິ່ງເປັນສະໜາມຮົບໃນເມື່ອກ່ອນ. ທ່ານໄດ້ເລົ່າຄືນວ່າ ທ່ານກໍໄດ້ເຄື່ອນໄຫວເຂົ້າຮ່ວມບັ້ນຮົບບໍ່ແຕນແຕ່ເດືອນພຶດສະພາ 1987 ຈົນສິ້ນສຸດສົງຄາມຊາຍແດນ ໃນເວລານັ້ນທ່ານໄດ້ຊັ້ນພຽງແຕ່ຮ້ອຍຕີ ເຮັດໜ້າທີ່ນຳເອົາຄຳສັ່ງຂອງຂັ້ນເທິງລົງໄປສູ່ແຕ່ລະຈຸດຕາມສະໜາມຮົບ ທັງເກັບກຳເອົາສະພາບການແຕ່ລະວັນກັບຄືນລາຍງານຕໍ່ກະຊວງ, ຕອນເຊົ້າຂີ່ຍົນນຳເອົາຄຳສັ່ງຂັ້ນເທິງລົງມາ ຕອນແລງເກັບກຳສະພາບການເມືອລາຍງານຂັ້ນເທິງ ບາງຄັ້ງກໍຄ້າງຢູ່ສະໜາມຮົບສອງສາມວັນ ຕິດພັນກັບອ້າຍນ້ອງສູ້ຮົບຢູ່ 1428, 1370 ແລະບ່ອນອື່ນໆ ບ່ອນທີ່ຕິດພັນທີ່ສຸດແມ່ນສູນບັນຊາບໍ່ສ້ານເປັນບ່ອນເຕົ້າໂຮມເອົາຂ່າວທີ່ມາຈາກທຸກທິດ, ວິເຄາະວິໄຈແລ້ວຈຶ່ງກັບເມືອລາຍງານຕໍ່ກະຊວງ, ໝູ່ເພື່ອນສະຫາຍຈຳນວນໜຶ່ງກໍໄດ້ເອົາເລືອດເອົາຊີວິດແລກເອົາຜືນແຜ່ນດິນແຫ່ງນີ້; ບ້ານບໍ່ສ້ານ ແລະ ຊາວບໍ່ສ້ານ ກໍໄດ້ຮັບຜົນກະທົບໂດຍກົງຈາກສົງຄາມຊາຍແດນ, ໃນໄລຍະເດືອນພະຈິກ-ທັນວາ 1987 ບ້ານບໍ່ສ້ານຖືກກະທົບໜັກ ທັງກຳລັງໄຟໜ້າດິນ ທັງທາງອາກາດ ເຊັ່ນລູກແຕກລູກບົ່ມອາດຍັງຄ້າງຢູ່ບ້ານນີ້, ແຕ່ປະຊາຊົນບ້ານບໍ່ສ້ານຍັງບໍ່ໜີໄປໃສ ຍັງຕິດພັນກັບຜືນແຜ່ນດິນອັນນ້ອຍໆແຫ່ງນີ້, ອັນນີ້ເປັນສັນຍະລັກຂອງກຸ່ມຄົນກ້າຫານຂອງຄົນຮັກຊາດທີ່ແທ້ຈິງ. ຜ່ານໄລຍະເວລາກວ່າ 36 ປີ ກັບຄືນມາເທື່ອນີ້ຮູ້ສຶກສະອື້ນໃຈຫຼາຍ, ຄິດຮອດໝູ່ເພື່ອນທີ່ໄດ້ເສຍສະຫຼະຊີວິດໄປ, ຄິດຮອດພໍ່ແມ່ພີ່ນ້ອງຊາວບໍ່ສ້ານທີ່ໄດ້ສູ້ຊົນເພື່ອປົກປັກຮັກສາຜືນແຜ່ນດິນແຫ່ງນີ້ຮ່ວມໄມ້ຮ່ວມມືກັບພັກ-ລັດ ແລະ ກອງທັບ ປົກປັກຮັກສາຜືນແຜ່ນດິນແຫ່ງນີ້ຕະຫຼອດມາ.

ພ້ອມດຽວກັນນີ້, ທ່ານກໍແຈ້ງໃຫ້ຊາບວ່າ ຈະນຳເອົາຄຳສະເໜີຕ່າງໆຂອງພໍ່ແມ່ປະຊາຊົນບ້ານບໍ່ສ້ານ ໄປລາຍງານຕໍ່ ຄປຈສພຊ ເພື່ອຊຸກຍູ້ກະຊວງ, ອົງການ, ພະແນກການ ແລະ ຂະແໜງການກ່ຽວຂ້ອງຄົ້ນຄວ້າພິຈາລະນາ; ໃນໂອກາດທີ່ລົງມາຢ້ຽມຢາມພໍ່ແມ່ປະຊາຊົນຄັ້ງນີ້, ທ່ານ ພົທ. ສຸວອນ ເລືອງບຸນມີ ຍັງໄດ້ມອບເງິນສ່ວນຕົວຈຳນວນ 20 ລ້ານກີບ ເພື່ອປະກອບສ່ວນຊື້ວັດຖຸເຮັດເພດານສະໂມສອນບ້ານບໍ່ສ້ານອີກດ້ວຍ.

ນອກຈາກນີ້, ຄະນະຂອງທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ລົງຕິດຕາມຕາຝັ່ງເຈື່ອນຕາມຊາຍແດນເຂດດ່ານປະເພນີເໜືອງແພ່ ລະຫວ່າງເມືອງບໍ່ແຕນ ແລະ ອຳເພີດ່ານຊ້າຍ ຈັງຫວັດເລີຍ.

ກ່ອນໜ້ານັ້ນ, ໃນວັນທີ 23 ກຸມພາ, ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງໄດ້ເຂົ້າຮ່ວມພິທີເປີດບຸນເຂົ້າຈີ່ໃຫຍ່ຂອງເມືອງບໍ່ແຕນ ຕາມຄຳເຊີນຂອງທ່ານ ພົງສະຫວັນ ສິດທະວົງ ກຳມະການສູນກາງພັກ, ເຈົ້າແຂວງໆໄຊຍະບູລີ ພ້ອມທັງປະກອບສ່ວນເງິນຈຳນວນ 10 ລ້ານກີບ ແລະ ເຂົ້າຮ່ວມງານເປີດໂຕສະຖານທີ່ທ່ອງທ່ຽວຕາດສະແນນ, ສະຖານທີ່ທ່ອງທຽວແຫ່ງໃໝ່ຂອງເມືອງບໍ່ແຕນ ແຂວງໄຊຍະບູລີ.

**(ສອນສັກ ວັນວິໄຊ)**

## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ມີທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງ, ຄປຈສພຂ, ເຈົ້າເມືອງ, ຫົວໜ້າພະແນກການ, ອົງການ, ກົມກອງ ພ້ອມດ້ວຍບັນດາທ່ານຫົວໜ້າຫ້ອງການອ້ອມຂ້າງຂອງເມືອງໄຊຍະບູລີແລະແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດສະບັບເລກທີ 01/ຄປຈ, ລົງວັນທີ 03 ມັງກອນ 2024 ວ່າດ້ວຍການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ແລະ ສະບັບເລກທີ 03/ຄປຈ, ລົງວັນທີ 05 ມັງກອນ 2024 ວ່າດ້ວຍການສ້າງແຜນການສ້າງ ແລະ ປັບປຸງກົດໝາຍ ໄລຍະ2026-2030; ຄຳແນະ ນຳຂອງຄະນະປະຈຳສະພາປະຊາຊົນແຂວງໄຊຍະບູລີ ກ່ຽວກັບການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍສະບັບເລກທີ 102/ຄປຈ.ສພຂ, ລົງວັນທີ 25 ສິງຫາ 2023. ຈາກນັ້ນ, ບັນດາທ່ານຜູ້ເຂົ້າຮ່ວມໄດ້ພ້ອມກັນມີຄຳເຫັນຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມ.

ໂອກາດດັ່ງກ່າວ, ທ່ານຮອງປະທານສະພາແຫ່ງຊາດໄດ້ມີຄຳເຫັນໂອ້ລົມໂດຍຍົກໃຫ້ເຫັນຜົນງານອັນພົ້ນເດັ່ນຂອງສະພາແຫ່ງຊາດ ເປັນຕົ້ນແມ່ນການສ້າງແລະປັບປຸງກົດໝາຍ; ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ ແລະ ຍົກໃຫ້ເຫັນຄວາມໝາຍຄວາມສຳຄັນຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ 2 ສະບັບດັ່ງກ່າວ ພ້ອມທັງເນັ້ນໜັກໃຫ້ເອົາໃຈໃສ່ບາງບັນສຳຄັນດັ່ງນີ້: ຊີ້ນຳນຳພາຢ່າງໃກ້ຊິດຕໍ່ການປະຕິບັດ ແລະ ເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ; ຈັດຕັ້ງເຊື່ອມຊຶມລະບຽບ, ກົດໝາຍໃຫ້ເລິກເຊິ່ງກວ້າງຂວາງ ແລະ ເລີ່ມເຂົ້າຮ່ວມວາງແຜນຈັດຕັ້ງປະຕິບັດ; ຍົກສູງຄວາມຮັບຜິດຊອບຂອງການຈັດຕັ້ງທຸກຂັ້ນ, ຂອງສະມາຊິກພັກທຸກສະຫາຍ ໃຫ້ຖືເປັນການແຂ່ງຂັນອັນໜຶ່ງ; ມີແຜນການລະອຽດ ສາມາດປະຕິບັດໄດ້ແລະສະຫຼຸບຕີລາຄາໃນການຈັດຕັ້ງປະຕິບັດໃຫ້ຈະແຈ້ງເປັນລະບົບ.

ໃນຕອນເຊົ້າຂອງວັນດຽວກັນ ທີ່ຫ້ອງປະຊຸມ ສພຂ ໄຊຍະບູລີ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ກໍໄດ້ຈັດກອງປະຊຸມຖອດຖອນບົດຮຽນການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ6 ຂອງສະພາແຫ່ງຊາດຊຸດທີ IX ທີ່ໄດ້ລົງເຄື່ອນໄຫວເຜີຍແຜ່ຢູ່ເມືອງຕ່າງໆພາຍໃນແຂວງເມື່ອເດືອນມັງກອນຜ່ານມາ.

**(ສອນສັກ ວັນວິໄຊ)**



## ລະດົມ...

(ຕໍ່ຈາກໜ້າ 1)

26-27 ກຸມພາ 2024 ທີ່ແຂວງສາລະວັນ ແລະ ລະຫວ່າງວັນທີ 29 ກຸມພາ-01 ມີນາ 2024 ທີ່ແຂວງຄຳມ່ວນ ໄດ້ຈັດກອງປະຊຸມສຳມະນາລະດົມຄວາມຄິດເຫັນໃສ່ບົດຄົ້ນຄວ້າວິທະຍາສາດຂອງ ສນສ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີປະທານ-ຮອງປະທານສະພາປະຊາຊົນແຂວງ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຄະນະເລຂາທິການສະພາປະຊາຊົນແຂວງ 6 ແຂວງຄື: ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື.

ຈຸດປະສົງຕົ້ນຕໍຂອງກອງປະຊຸມ ແມ່ນການລະດົມຄວາມເຫັນໃສ່ບັນດາຮ່າງເອກະສານຄົ້ນຄວ້າວິທະຍາສາດ ເພື່ອສ້າງເປັນຫຼັກສູດເຝິກອົບຮົມໃຫ້ແກ່ ສສຊ, ສສຂ ແລະ ພະນັກງານເສນາທິການທີ່ກ່ຽວຂ້ອງ ເຊິ່ງມີ 8 ຫົວຂໍ້ ຄື: 1) ຄວາມຮູ້ພື້ນຖານກ່ຽວກັບສະພາແຫ່ງຊາດ, 2) ຄວາມຮູ້ພື້ນຖານກ່ຽວກັບສະພາປະຊາຊົນຂັ້ນແຂວງ, 3) ການຍົກສູງຄຸນນະພາບໃນການຕິດຕາມກວດກາຂອງສະພາແຫ່ງຊາດ, 4) ການໃຫ້ສຳພາດຂ່າວຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ, 5) ຄວາມຮູ້ພື້ນຖານການຕິດຕາມກວດກາຂອງສະພາແຫ່ງຊາດ, 6) ການປະກອບຄຳເຫັນ ແລະ ການຊັກຖາມໃນກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, 7) ຄວາມຮູ້ພື້ນຖານໃນການສ້າງກົດໝາຍ ແລະ 8) ເອກະສານພາວະຄວາມເປັນຜູ້ນຳ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໃຫ້ຮູ້ວ່າ: ສະຖາບັນຄົ້ນຄວ້ານິຕິກຳ ໄດ້ຄົ້ນຄວ້າຫົວຂໍ້ວິທະຍາສາດ ແລະ ຫຼັກສູດ ສຳເລັດໂດຍພື້ນຖານ ຈຳນວນ 09 ຫົວຂໍ້, ຈັດພິມປຶ້ມປະມວນມະຕິການຈັດຕັ້ງ ແລະ ການເຄື່ອນໄຫວຂອງບັນດາກົງຈັກຂອງສະພາແຫ່ງຊາດ, ຈັດພິມແຜ່ນພັບຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ປຶ້ມປະມວນເອກະສານການສະເຫຼີມສະຫຼອງວັນລັດຖະທຳມະນູນ ຄົບຮອບ 30 ປີ, ຈັດພິມປຶ້ມຄູ່ມືກ່ຽວກັບບາງບົດຮຽນການເຄື່ອນໄຫວຂອງສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ຈຳນວນ 03 ເຫຼັ້ມ, ສ້າງ ແລະ ປັບປຸງລະບົບເຄືອຂ່າຍພາຍໃນຂອງສະພາແຫ່ງຊາດ ແລະອື່ນໆ. ເຖິງຢ່າງໃດກໍຕາມ, ຜ່ານການຈັດກອງປະຊຸມເຝິກອົບຮົມການຍົກສູງຂີດຄວາມສາມາດໃນໄລຍະ 2 ປີກວ່າທີ່ຜ່ານມາ ເຫັນວ່າບາງຫົວຂໍ້ເອກະສານຍັງບໍ່ທັນໄດ້ຄົ້ນຄວ້າຂຽນເປັນຫຼັກສູດ ແລະ ປຶ້ມຄູ່ມືທີ່ເປັນລະບົບ ແລະ ມີເນື້ອໃນຕາມຫຼັກວິທະຍາສາດ-ວິຊາການຢ່າງເລິກເຊິ່ງເທື່ອ ເຊິ່ງມີຄວາມຈຳເປັນຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າຂຽນເປັນຫົວຂໍ້ວິທະຍາສາດ ແລະ ຫຼັກສູດຕ່າງໆ ຕາມທີ່ໄດ້ກຳນົດຢູ່ໃນແຜນພັດທະນາການຍົກສູງຂີດຄວາມສາມາດ ກໍຄືແຜນພັດທະນາວຽກງານໄລຍະ 5 ປີ ຂອງສະຖາບັນຄົ້ນຄວ້ານິຕິກຳ ເພື່ອຮັບໃຊ້ໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກໍຄືສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການວຽກງານສະພາ ໃຫ້ມີປະສິດທິຜົນສູງກວ່າເກົ່າ.

**(ນາງ ກຸກກິກ ບຸດດາໄຊ)**




## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ) ວັນທີ 28 ກຸມພາ 2024 ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວເຮັດວຽກຢູ່ເມືອງນາກາຍ ແຂວງຄຳມ່ວນ ເພື່ອຕິດຕາມໂຄງການຊ່ວຍເຫຼືອການປູກຝັງລ້ຽງສັດ ຈາກເມືອງເຮືອງເຄ ແຂວງຮ່າຕິ໋ງ ສສ.ຫວຽດນາມ.

ໃນໂອກາດນີ້, ທ່ານ ດູກມາ ທອງວິໄຊ ຫົວໜ້າສະຖານີສູນບໍລິການເຕັກນິກກະສິກຳ-ປ່າໄມ້ ໄດ້ລາຍງານກ່ຽວກັບໂຄງການຊ່ວຍເຫຼືອດັ່ງກ່າວວ່າ: ເມືອງເຮືອງເຄແຂວງຮ່າຕິ໋ງ ໄດ້ຊ່ວຍເຫຼືອໂຄງການປູກໝາກກ້ຽງ ຈຳນວນ 1,5 ເຮັກຕາ (600 ຕົ້ນ), ໂຄງການລ້ຽງໄກ່ຈຳນວນ 200 ໂຕ, ໂຄງການລ້ຽງງົວ ຈຳນວນ 10 ໂຕ ແລະ ໂຄງການປູກຫຍ້າ VA06 1 ເຮັກຕາ ໃຫ້ແກ່ເມືອງນາກາຍ.

ຫຼັງຈາກນັ້ນ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ພ້ອມດ້ວຍຄະນະຍັງໄດ້ຢ້ຽມຢາມປະຊາຊົນທີ່ສ້າງເສດຖະກິດຄອບຄົວຕົວແບບຂອງເມືອງນາກາຍ.

**(ນາງ ກຸກກິກ ບຸດດາໄຊ)**



## ກຳມະບານ...

(ຕໍ່ຈາກໜ້າ 1)

ກັບການຍັ້ງຢືນ 5 ເປັນເຈົ້າ; ຫຼັງຈາກນັ້ນ, ໄດ້ມອບໃບຍັ້ງຢືນ 5 ເປັນເຈົ້າ ຂອງ ສກລ ໃຫ້ແກ່ສະຫະພັນກຳມະບານສະພາແຫ່ງຊາດ ແລະ ໃບຍັ້ງຢືນ 5 ເປັນເຈົ້າ ຂອງຄະນະພັກສະພາແຫ່ງຊາດ ໃຫ້ແກ່ບັນດາຮາກຖານກຳມະບານສະພາແຫ່ງຊາດ.

ໂອກາດດັ່ງກ່າວສະຫາຍ ຮສ. ປອ. ລິນຄຳ ດວງສະຫວັນ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມວ່າ: ຄະນະພັກສະພາແຫ່ງຊາດ ເວລາໃດກໍຖືອົງການຈັດຕັ້ງມະຫາຊົນ ເວົ້າລວມ, ເວົ້າສະເພາະອົງການຈັດຕັ້ງກຳມະບານ ເປັນກຳລັງແຮງສັງລວມເຂັ້ມແຂງຂອງພັກ ໃນການສ້າງຂະບວນການແຂ່ງຂັນ ຕິດພັນກັບການປະຕິບັດໜ້າທີ່ດ້ານວິຊາສະເພາະ. ເພື່ອເປັນບ່ອນອີງໃຫ້ແກ່ສະຫະພັນກຳມະບານສະພາແຫ່ງຊາດສືບຕໍ່ເຄື່ອນໄຫວຕາມພາລະບົດບາດຂອງຕົນ, ສະຫາຍໄດ້ມີທິດຊີ້ນຳດັ່ງນີ້: ສືບຕໍ່ເອົາໃຈໃສ່ຍົກສູງທາງດ້ານການເມືອງ-ແນວຄິດ, ຄຸນທາດການເມືອງຄຸນສົມ ບັດສິນທຳປະຕິວັດ; ເຊື່ອມຊຶມກຳແໜ້ນມູນເຊື້ອ ແລະ ທາດແທ້ຂອງພັກ, ມູນເຊື້ອກຳມະບານລາວ ໃນຖານະເປັນການຈັດຕັ້ງໃນລະບົບການເມືອງຂອງພັກ ໃນລະບອບປະຊາທິປະໄຕປະຊາຊົນ; ຍົກສູງນ້ຳໃຈຮັກຊາດ, ຮັກລະບອບໃໝ່, ຮັດຄອງປະເພນີ, ພາສາປາກເວົ້າ; ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວບັນດາເຜົ່າ; ຖືຄັນທຸງຂອງພັກ ແລະ ເດີນຕາມເສັ້ນທາງຂອງພັກ ຢ່າງເດັດດ່ຽວໜຽວແໜ້ນສະເໝີຕົ້ນສະເໝີປາຍ. ເພີ່ມທະວີການປັບປຸງການຈັດຕັ້ງ, ແບບແຜນໃນການເຄື່ອນໄຫວຕາມພາລະບົດບາດຂອງຕົນ; ຍຶດໝັ້ນທັດສະນະຊົນຊັ້ນຜູ້ອອກແຮງງານ, ມີຄວາມດຸໝັ່ນຂະຫຍັນພຽນ; ນັບຖື ແລະ ປະຕິບັດກົດລະບຽບກຳມະບານຢ່າງເຂັ້ມງວດ, ມີລະບຽບວິໄນໃນການປະຕິບັດໜ້າທີ່ຄວາມຮັບຜິດຊອບ; ເພີ່ມທະວີຄວາມບຸກບືນສູ້ຊົນ, ກ້າຫານ, ສະດຸ້ງໄວ ແລະ ປະດິດສ້າງຫຼາຍກວ່າເກົ່າ ໃນການເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ປະຕິບັດພາລະບົດບາດທີ່ກຳນົດໄວ້ໃນກົດໝາຍ ໃຫ້ມີປະສິດທິພາບແລະປະສິດທິຜົນສູງຍິ່ງໆຂຶ້ນ. ເອົາໃຈໃສ່ຄົ້ນຄວ້າ ແລະ ຜັນຂະຫຍາຍແນວຄິດຊີ້ນຳຂອງສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ກ່ຽວກັບ "ເສດຖະກິດເອກະລາດເປັນເຈົ້າຕົນເອງ" ໃຫ້ສອດຫ້ອຍເຂົ້າໃນຂົງເຂດວຽກງານຕົວຈິງ ໃນໄລຍະທີ່ປະເທດຊາດຂອງພວກເຮົາ ພວມຢູ່ໃນສະພາບຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ສະມາຊິກກຳມະບານ ແລະ ພະນັກງານ-ລັດຖະກອນ ຕ້ອງຍົກສູງບົດບາດ, ຄວາມເປັນເຈົ້າຕົນເອງ, ປັບປຸງກຳລັງແຮງສັງລວມໃຫ້ເຂັ້ມແຂງ ພ້ອມກັນບຸກທະລຸຜ່ານຜ່າຄວາມຫຍຸ້ງຍາກດັ່ງກ່າວ ໃຫ້ສຳເລັດຢ່າງແທ້ຈິງ. ສືບຕໍ່ຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ ຂອງສູນກາງສະຫະພັນກຳມະບານລາວ ກໍຄືການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2024 ຂອງສະຫະພັນກຳມະບານສະພາແຫ່ງຊາດ ຕິດພັນກັບຂະບວນການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ແລະ ຂະບວນ ການແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ໂດຍຮັບປະກັນໃຫ້ສະມາຊິກກຳມະບານປະກອບສ່ວນເຂົ້າໃນວຽກງານຂະບວນການ ບົນພື້ນຖານຄວາມເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີ, ສ້າງກຳລັງແຮງສັງລວມທີ່ເປັນປຶກແຜ່ນ, ຊ່ວຍເຫຼືອກັນແກ້ໄຂຊີວິດການເປັນຢູ່, ປົກປ້ອງຜົນປະໂຫຍດອັນຊອບທຳຂອງສະມາຊິກກຳມະບານ ແລະ ພະ ນັກງານລັດຖະກອນ; ແຂ່ງຂັນກັນສ້າງຜົນງານເພື່ອກາຍ ເປັນສະມາຊິກກຳມະບານດີເດັ່ນ, ປະກອບສ່ວນສ້າງຮາກຖານກຳມະບານດີເດັ່ນ ແລະ ສະຫະພັນກຳມະບານດີເດັ່ນ, ຮັກສາມູນເຊື້ອ 5 ເປັນເຈົ້າໄວ້ໄດ້ຕາມຄາດໝາຍ. ເອົາໃຈໃສ່ສົມທົບແໜ້ນກັບໄຕຣພາຄີເປັນຕົ້ນກັບສູນກາງສະຫະພັນກຳມະບານລາວ, ກຳມະບານກະຊວງແຮງງານ ແລະ ສະຫວັດດີການ-ສັງຄົມ, ກຳມະບານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ພ້ອມທັງສົມທົບແໜ້ນກັບພາຄີຂອງຕົນເປັນຕົ້ນແນວລາວສ້າງຊາດ, ຊາວໜຸ່ມ, ແມ່ຍິງ ແລະ ນັກຮົບເກົ່າ ເພື່ອປະກອບສ່ວນໃນການປົກປ້ອງກຳມະກອນ, ຊາວຜູ້ອອກແຮງງານລາວແລະປະກອບສ່ວນໃນການປົກປ້ອງແຮງງານສາກົນຕາມຖະແຫຼງການໃນແຕ່ລະໄລຍະ.

ສະຫະພັນກຳມະບານສະພາແຫ່ງຊາດ ປະກອບມີ 10 ກຳມະບານຮາກຖານ, ມີຄະນະບໍລິຫານງານ 11 ສະ ຫາຍ ຍິງ 4 ສະຫາຍ, ມີສະມາຊິກກຳມະບານທັງໝົດ 394 ສະຫາຍ ຍິງ 158 ສະຫາຍ.

**(ພາບ: ນາງ ສຸພາວັນ ທອມສະນິດ, ຂ່າວ: ນາງ ສຸມິນທາ ງາໄຊ)**

## ສຳເລັດ...

(ຕໍ່ຈາກໜ້າ 1)

ໃນການເຝິກອົບຮົມ, ວິທະຍາກອນໄດ້ນຳເອົາບົດຮຽນ ແລະ ປະສົບການມາຖ່າຍທອດໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້, ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຢ່າງສ້າງສັນ ແລະ ມີລັກສະນະວິຊາການ ໂດຍມີການສົນທະນາແລກປ່ຽນຄຳຄິດຄຳເຫັນຫຼາຍບັນຫາທີ່ຕິດພັນກັບການປະຕິບັດວຽກງານຕົວຈິງ ເຊິ່ງສະແດງອອກຜ່ານການແບ່ງກຸ່ມຄົ້ນຄວ້າເພື່ອສົນ ທະນາແລກປ່ຽນຮ່ວມກັນ ແລະ ວິທະຍາກອນ ກໍໄດ້ອະທິບາຍຊີ້ແຈງໃຫ້ເຂົ້າໃຈຢ່າງເລິກເຊິ່ງ.

ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ມີຄຳເຫັນກ່າວປິດວ່າ: ຜົນສຳເລັດຂອງຊຸດເຝິກອົບຮົມ ແມ່ນໝາກຜົນ ລວມຂອງບັນດາທ່ານທີ່ເຂົ້າຮ່ວມ ທີ່ເຫັນໄດ້ຄວາມໝາຍຄວາມສຳຄັນຂອງວຽກງານວິເຄາະ, ພັດທະນາການຈັດຕັ້ງ ແລະ ການຄຸ້ມຄອງບຸກຄະລາກອນ; ຮຽກຮ້ອງບັນດາທ່ານ ຈົ່ງນຳເອົາບົດຮຽນທີ່ໄດ້ຮັບຄັ້ງນີ້ ໄປໝູນໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ.

**(ນາງ ສຸມິນທາ ງາໄຊ)**

# ປັບປຸງ ແລະ ຮຽບຮຽງຮ່າງຂໍ້ຕົກລົງການຄຸ້ມຄອງການຈັດງານ ແລະ ບຸນປະເພນີພາຍໃນແຂວງຫຼວງນໍ້າທາ



(ສພຊ) ເພື່ອເຮັດໃຫ້ການຄຸ້ມຄອງການຈັດງານ ແລະ ບຸນປະເພນີຕ່າງໆພາຍໃນແຂວງຫຼວງນໍ້າທາມີຄວາມສະຫງົບ, ເປັນລະບຽບ, ກະທັດຮັດ, ຫຼຸດຜ່ອນປະກົດການຫຍໍ້ທໍ້, ສັງຄົມຫັນໄປສູ່ການປະຢັດມັດທະຍັດ ແລະ ຕ້ານການຟຸມເຟືອຍເທື່ອລະກ້າວ ໃນວັນທີ 14 ກຸມພາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫຼວງນໍ້າທາ ໄດ້ເປີດກອງປະຊຸມປັບປຸງ ແລະ ຮຽບຮຽງຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດງານ ແລະ ບຸນປະເພນີພາຍໃນແຂວງຫຼວງນໍ້າທາ ພາຍໃຕ້ການເປັນປະທານຂອງທ່ານ ຈັນທະສຸລິນ ໝັ້ນປະດິດ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ ທັງເປັນປະທານຄະນະກຳມະການຍຸຕິທຳ, ປກຊ-ປກສ ສະພາປະຊາຊົນແຂວງ, ມີ ສສຊ ປະຈຳເຂດເລືອກຕັ້ງ, ຄະນະເລຂາທິການ ແລະ ຄະນະຮັບຜິດຊອບຮ່າງຂໍ້ຕົກລົງສະບັບນີ້ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ ຄະນະຮັບຜິດຊອບໄດ້ຜ່ານຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດງານ ແລະ ບຸນປະເພນີພາຍໃນແຂວງຫຼວງນໍ້າທາ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ທີ່ນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງຫຼວງນໍ້າທາ ຊຸດທີ II ຜ່ານມານີ້ ລວມທັງໝົດມີ 11 ໝວດ, 47 ມາດຕາ; ຈາກນັ້ນ, ຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດເຫັນຕໍ່ຮ່າງຂໍ້ຕົກລົງດັ່ງກ່າວຢ່າງກົງໄປກົງມາ ທັງນີ້ກໍເພື່ອເຮັດໃຫ້ຮ່າງຂໍ້ຕົກລົງນີ້ມີເນື້ອໃນຖືກຕ້ອງສົມບູນ, ສອດຄ່ອງກັບສະພາບຄວາມເປັນຈິງພາຍໃນແຂວງ ແລະ ເຮັດໃຫ້ການສ້າງຂໍ້ຕົກລົງສະບັບນີ້ໄດ້ຮັບຜົນສຳເລັດ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ເກີດປະໂຫຍດສູງສຸດ.

**(ນາງ ວັນນີ ແຜງບົວວັນ)**

# ສພຂ ຫົວພັນ ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ ສສຂ

(ສພຊ) ເພື່ອຍົກສູງຂີດຄວາມສາມາດ ແລະ ທັກສະການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ II ໃນການຈັດຕັ້ງປະຕິບັດພາລະບົດບາດຂອງຕົນ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າຢ່າງມີປະສິດທິພາບ ແລະ ປະສິດທິຜົນ. ໃນລະຫວ່າງວັນທີ 15-16 ກຸມພາ 2024, ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມເຝິກອົບຮົມວິທີການແນະນຳໃຫ້ຄຳປຶກສາທີ່ດີກັບປະຊາຊົນຂອງ ສສຂ ຊຸດທີ II ຢູ່ຫ້ອງປະຊຸມຫ້ອງວ່າການເມືອງກ້ອນ ແຂວງຫົວພັນ ພາຍໃຕ້ການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8, ປະທານສະພາປະຊາຊົນແຂວງຫົວພັນ ເຂົ້າຮ່ວມມີວິທະຍາກອນ, ສຳມະນາກອນ, ສສຂ ປະຈຳເຂດເລືອກຕັ້ງ 10 ເມືອງທົ່ວແຂວງ ຕະຫຼອດຮອດພະນັກງານ-ລັດຖະກອນ ຈາກຂະແໜງການກ່ຽວຂ້ອງຂອງ ສພຂ ເຂົ້າຮ່ວມທັງໝົດ 47 ຄົນ, ຍິງ 6 ຄົນ; ເຊິ່ງການເຝິກອົບຮົມຄັ້ງນີ້ແມ່ນໄດ້ຮັບການສະໜັບສະໜູນດ້ານງົບປະມານ ຈາກໂຄງການມູນນິທິເອເຊຍ (The Asia Foundation).




ກອງປະຊຸມ, ໄດ້ຮັບຟັງການນຳສະເໜີ ຈຳນວນ 4 ເອກະສານພາຍໃຕ້ຫົວຂໍ້: ບົດແລກປ່ຽນຄວາມເຫັນ ກ່ຽວກັບການຕິດຕາມກວດກາວຽກງານຍຸຕິທຳ; ເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງປີ 2022; ການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາປະຊາຊົນແຂວງ; ຮ່າງບົດລາຍງານການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ແລະ ຮ່າງໜັງສືສະເໜີ, ຮ່າງບົດລາຍງານ, ຮ່າງໃບຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ແລະ ເຜີຍແຜ່ມະຕິ ສະພາແຫ່ງຊາດ ສະບັບເລກທີ 07/ສປຈ, ວ່າດ້ວຍການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ; ພ້ອມດຽວກັນນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນປະກອບຄຳຄິດຄຳເຫັນແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ພ້ອມທັງຍົກປະສົບການໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕົວຈິງມາສົມທຽບກັບບັນດາເນື້ອໃນທີ່ທາງກອງປະຊຸມໄດ້ນຳມາເຝິກອົບຮົມໃນຄັ້ງນີ້ ທັງນີ້ ກໍເພື່ອໃຫ້ມີຄວາມຮັບຮູ້ເຂົ້າໃຈເລິກເຊິ່ງ ຄວາມເປັນເອກະພາບກັນ ແລະ ນຳໄປຈັດຕັ້ງປະຕິບັດຕາມພາລະບົດບາດຂອງຕົນໃຫ້ນັບມື້ດີຂຶ້ນ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນໂອ້ລົມ ພ້ອມທັງຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ຈົ່ງພ້ອມກັນນຳເອົາຄຳຄິດຄຳເຫັນ ແລະ ຄວາມຮູ້ຈາກວິທະຍາກອນ ທີ່ໄດ້ນຳສະເໜີມານັ້ນໄປຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງ ເພາະວ່າຫົວຂໍ້ການແກ້ໄຂຄຳຮ້ອງຂໍຄວາມເປັນທຳເປັນວຽກງານທີ່ສຳຄັນ ແນໃສ່ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ໃຫ້ເຂົ້າສູ່ລວງເລິກເທື່ອລະກ້າວ ແລະ ຍັງໄດ້ເນັ້ນໜັກບາງບັນຫາສຳຄັນ ເຊັ່ນ: ການເພີ່ມທະວີການລົງຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງຕໍ່ກັບຄວາມຮັບຜິດຊອບການເມືອງຂອງອົງການທີ່ມີສິດ ແລະ ໜ້າທີ່ໃນການແກ້ໄຂຄຳຮ້ອງເພື່ອຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ປະຊາຊົນສາມາດເຂົ້າໃຈຕໍ່ຂະບວນການຍຸຕິທຳຫຼາຍຂຶ້ນ ຮັບປະກັນຄວາມຍຸຕິທຳ ແລະ ໂປ່ງໃສ ເອົາໃຈໃສ່ຄົ້ນຄວ້າເກັບກຳຂໍ້ມູນ ວິເຄາະ, ວິໄຈ ໃຫ້ລະອຽດຈະແຈ້ງ ເພື່ອເປັນບ່ອນອີງໃນການຄົ້ນຄວ້າຄຳຮ້ອງ ຄຳສະເໜີຂອງປະຊາຊົນ ປະສານສົມທົບກັບພາກສ່ວນກ່ຽວຂ້ອງຄົ້ນຄວ້າພິຈາລະນາແກ້ໄຂ, ເອົາໃຈໃສ່ຕິດຕາມກວດກາຜົນຂອງການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງຂະແໜງການກ່ຽວຂ້ອງໃຫ້ມີຄວາມຖືກຕ້ອງຕາມ 5 ຫຼັກການ, ໃຫ້ຄຳປຶກສາ ແລະ ຄຳແນະນຳແກ່ພົນລະເມືອງກ່ຽວກັບການຍື່ນຄຳຮ້ອງຂໍຄວາມເປັນທຳ ແລະ ບັນຫາຕ່າງໆທີ່ຕິດພັນກັບຜົນປະໂຫຍດຂອງປະຊາຊົນ ເປັນເຈົ້າການໃນການຕິດຕາມກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານ ລະບົບອຳນາດລັດທີ່ຕິດພັນກັບວຽກງານກວດສອບ, ກວດກາບັນຫາສຳຄັນ ຕ້ອງໄດ້ຊຸກຍູ້, ກະຕຸ້ນການແກ້ໄຂຜົນຂອງການກວດສອບ ແລະ ຜົນຂອງການກວດກາໃຫ້ໄວ ແລະ ເຂັ້ມງວດ.

**(ນັກຂ່າວ ສພຂ)**



# ສະຫຼຸບການເຄື່ອນໄຫວວຽກງານຮອບດ້ານຂອງຄະນະພັກຮາກຖານ ສພຂ ສາລະວັນ

(ສພຊ) ວັນທີ 30 ມັງກອນຜ່ານມານີ້, ທີ່ສະພາປະຊາຊົນແຂວງ (ສພຂ) ສາລະວັນ ຄະນະພັກຮາກຖານ ສພຂ ສາລະວັນ ໄດ້ສຳເລັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຮອບດ້ານ ປະຈຳປີ 2023 ແລະ ວາງທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ໂດຍການເປັນປະທານຂອງສະຫາຍ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ, ເລຂາຄະນະພັກຮາກຖານ ສພຂ, ເຂົ້າຮ່ວມມີສະຫາຍ ສົມພອນ ແສງສຸລິຈັນ ຮອງເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກຄະນະເລຂາທິການ, ມີບັນດາສະຫາຍເລຂາ-ຮອງເລຂາຄະນະໜ່ວຍພັກ, ບັນດາສະຫາຍສະມາຊິກພັກ ທີ່ຂຶ້ນກັບຄະນະພັກຮາກຖານ ສພຂ ເຂົ້າຮ່ວມ.



ໃນກອງປະຊຸມ, ສະຫາຍ ສາຍສະໝອນ ອິນທິເສນ ຄະນະພັກຮາກຖານ ເລຂາໜ່ວຍພັກຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ໄດ້ຂຶ້ນຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຮອບດ້ານ ປະຈຳປີ 2023 ເຊິ່ງຕະຫຼອດໄລຍະ 1 ປີທີ່ຜ່ານມາ ຄະນະພັກຮາກຖານ ສພຂ ຮັກສາໄດ້ຄວາມສະຫງົບໂດຍພື້ນຖານ, ມີສະຖຽນລະພາບທາງດ້ານການເມືອງ ຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງສູນກາງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງອົງຄະນະພັກແຂວງ, ຕິດພັນກັບການຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມສະພາແຫ່ງຊາດ ຊຸດທີ IX ແລະ ມະຕິກອງປະຊຸມ ສພຂ ຊຸດທີ II ໃຫ້ເປັນແຜນງານ, ໂຄງການ ແລະ ກິດຈະກຳລະອຽດຂອງຕົນ ເພື່ອຈັດຕັ້ງປະຕິບັດໃຫ້ເກີດໝາກເກີດຜົນ ແລະ ເຂົ້າສູ່ຊີວິດສັງຄົມຕົວຈິງ, ພ້ອມຍຶດໝັ້ນ ແລະ ປະຕິບັດຢ່າງເຂັ້ມງວດ ຕາມ 5 ຫຼັກການ 3 ທິດນຳ ໃນການກໍ່ສ້າງພັກ ແລະ ປັບປຸງພັກ, ສະມາຊິກພັກມີສະຕິເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດຢ່າງເຂັ້ມງວດ; ນອກນັ້ນ, ຍັງມີຜົນສຳເລັດຂອງການນຳພາວຽກງານຮອບດ້ານ ເຊັ່ນ: ດ້ານການເມືອງ, ດ້ານແນວຄິດ, ດ້ານການຈັດຕັ້ງ, ດ້ານວິຊາສະເພາະ, ວຽກງານກໍ່ສ້າງພັກ-ພະນັກງານ, ວຽກງານຂະຫຍາຍສະມາຊິກພັກ, ວຽກງານການເງິນພັກ ໂດຍລວມສາມາດເຄື່ອນໄຫວມີຜົນສຳເລັດຫຼາຍເປັນສ່ວນໃຫຍ່ ແຕ່ກໍຍັງມີບາງດ້ານທີ່ສະແດງໃຫ້ເຫັນເຖິງ ຈຸດອ່ອນ ແລະ ຂໍ້ຄົງຄ້າງ ໃນການປະຕິບັດໜ້າທີ່ວຽກງານທີ່ບໍ່ສາມາດປະຕິບັດໄດ້; ຈາກນັ້ນ, ໄດ້ຮັບຟັງການສະເໜີເອກະສານ 2 ສະບັບ ຄື: ຂໍ້ຕົກລົງ ວ່າດ້ວຍການກະກຽມເປີດກອງປະຊຸມໃຫຍ່ຂອງຄະນະພັກຮາກຖານ ສພຂ ແລະ ແຜນກະກຽມກອງປະຊຸມໃຫຍ່ 3 ຂັ້ນ ຂອງຄະນະພັກຮາກຖານ ສພຂ; ຫຼັງຈາກນັ້ນ, ບັນດາສະຫາຍທີ່ເຂົ້າຮ່ວມກອງປະຊຸມ ໄດ້ຍົກສູງຄວາມຮັບຜິດຊອບຂອງຕົນສຸມສະຕິປັນຍາປະກອບສ່ວນຄົ້ນຄວ້າປຶກສາຫາລື ເພື່ອປັບປຸງຮ່າງບົດສະຫຼຸບ ໃຫ້ມີເນື້ອໃນຖືກຕ້ອງ ຄົບຖ້ວນ ຕາມຫຼັກການລວມສູນປະຊາທິປະໄຕຂອງພັກ ທັງນີ້, ເພື່ອເປັນບ່ອນອີງໃຫ້ແກ່ການກຳນົດແຜນການເຄື່ອນໄຫວວຽກງານໃນປີ 2024 ຂອງຄະນະພັກຮາກຖານ ໃຫ້ໄດ້ເຄື່ອນໄຫວ ແລະ ປະສົບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

**(ດີລຳພົນ ພົມມະຈັນ)**

# ພົບປະຢ້ຽມຢາມ ແລະ ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນ ຢູ່ເມືອງສິງ



(ສພຊ) ໃນລະຫວ່າງວັນທີ 8-9 ກຸມພາ 2024, ສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ໄດ້ເຄື່ອນໄຫວພົບປະຢ້ຽມຢາມແລະເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ຊຸດທີ II ຢູ່ເມືອງສິງ ແຂວງຫຼວງນ້ຳທາ ລວມທັງໝົດ 4 ຈຸດຄື: ສະໂມສອນເມືອງສິງ, ບ້ານຢາງຫຼວງ, ບ້ານຫູ້ກຄຳ ແລະ ບ້ານປຸ່ງກອກ ນຳໂດຍທ່ານ ກົງເພັດ ແກ້ວບົວພາ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງສິງເຂົ້າຮ່ວມ ຮັບຟັງມີຄະນະນຳຂອງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ພະນັກງານລັດຖະກອນອ້ອມຂ້າງເມືອງ, ສອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະພັກຮາກຖານ, ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ເຂົ້າຮ່ວມທັງໝົດ 341 ຍິງ 119 ຄົນ.

ໃນໂອກາດນີ້, ໄດ້ຮັບຟັງການເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງໄດ້ພິຈາລະນາ ແລະ ຮັບຮອງເອົາຫຼາຍບັນຫາພື້ນຖານສຳຄັນຂອງປະເທດຊາດ ຄື: ພິຈາລະນາ, ຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5 ປີ ຄັ້ງທີ IX (2021-2025); ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ ກາງສະໄໝ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການສະຫຼຸບຂາດຕົວຂອງການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2023 ແລະ ແຜນເງິນຕາ ປະຈຳປີ 2023, ແຜນງົບປະມານແຫ່ງລັດ ປະຈຳປີ 2024 ແລະ ແຜນເງິນຕາ 2024 ຂອງລັດຖະບານ; ບົດລາຍງານຂອງອົງການກວດກາ ແລະ ກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2024 ອົງການກວດສອບແຫ່ງລັດ; ຮັບຮອງເອົາຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງລັດຖະບານໃນໄລຍະ 3 ປີ (2021-2023); ຮັບຮອງເອົາຜົນຂອງການປະເມີນກົດໝາຍຂົງເຂດປ້ອງກັນຊາດປ້ອງກັນຄວາມສະຫງົບ ຈຳນວນ 3 ສະບັບ; ຮັບຮອງບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 2 ປີເຄິ່ງ (2021-2023) ຂອງອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ; ບົດລາຍງານການຈັດຕັ້ງປະຕິບັດເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025) ແລະທິດທາງແຜນການທ້າຍສະໄໝ ຮອດປີ 2025 ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024 ຂອງສະພາແຫ່ງຊາດ ຊຸດທີ IX.

ພ້ອມດຽວກັນນັ້ນ, ໄດ້ຮັບຟັງການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຂ ຫຼວງນ້ຳທາ ຊຸດທີ II ເຊິ່ງໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນຂອງແຂວງ ເປັນຕົ້ນ: ພິຈາລະນາ, ຮັບຮອງບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງແຂວງ; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງແຂວງ; ບົດລາຍງານຂອງອົງການກວດກາລັດແຂວງ ແລະ ອົງການກວດສອບແຫ່ງລັດປະຈຳພາກເໜືອ; ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ; ບົດສະຫຼຸບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການປະຈຳປີ 2024 ຂອງ ສພຂ; ຮັບຮອງເອົາຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການຈັດງານ ແລະ ງານບຸນປະເພນີຕ່າງໆຢູ່ບັນດາເມືອງ ແລະ ໄດ້ຮັບຟັງບົດລາຍງານການຈັດຕັ້ງປະຕິບັດສອງວາລະແຫ່ງຊາດຢູ່ແຂວງຫຼວງນ້ຳທາ.

**(ນັກຂ່າວ ສພຂ)**



# ກອງປະຊຸມປະຈຳເດືອນມັງກອນ 2024 ຂອງຄະນະປະຈຳ ສພຂ ສາລະວັນ

(ສພຊ) ເພື່ອເປັນການສະຫຼຸບຕີລາຄາຄືນການເຄື່ອນໄຫວວຽກງານ ປະຈຳເດືອນມັງກອນ 2024 ແລະ ກຳນົດແຜນເຄື່ອນໄຫວວຽກສືບຕໍ່ປະຈຳເດືອນກຸມພາ 2024 ຂອງຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ສາລະວັນ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ເຂົ້າສູ່ວຽກງານຕົວຈິງໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິຜົນ; ໃນວັນທີ 29 ມັງກອນຜ່ານມາ; ຄະນະປະຈຳ ສພຂ ສາລະວັນ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານ ປະຈຳເດືອນມັງກອນ 2024 ແລະ ແຜນການເຄື່ອນໄຫວວຽກງານປະຈຳເດືອນກຸມພາ 2024; ໂດຍການເປັນປະທານກອງປະຊຸມຂອງທ່ານ ສີເຮັງ ທອມສົມບັດ ຮອງເລຂາພັກແຂວງ, ປະທານຄະນະປະຈຳສະພາປະຊາຊົນແຂວງ, ເຂົ້າຮ່ວມມີຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ, ຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າຂະແໜງເຂົ້າຮ່ວມ.




ໃນໂອກາດນີ້, ທ່ານ ສົມພອນ ແສງສຸລິຈັນ ຄະນະປະຈຳສະພາປະຊາຊົນແຂວງ, ເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານຮ່າງບົດສະຫຼຸບຂອງຄະນະປະຈຳ ປະຈຳເດືອນມັງກອນ 2024 ໂດຍລວມແມ່ນຈັດຕັ້ງປະຕິບັດຕາມ 3 ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ ໂດຍສະເພາະດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ດ້ານການຕິດຕາມ-ກວດກາ ສາມາດມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ທັງນີ້ຍ້ອນຄວາມເປັນເຈົ້າການບຸກບືນເອົາໃຈໃສ່ຊີ້ນຳ-ນຳພາວຽກງານຮອບດ້ານ ຂອງຄະນະປະຈຳ ສພຂ ແລະ ມີຄວາມສາມັກຄີເປັນເອກະພາບພາຍໃນ ຈຶ່ງເຮັດໃຫ້ວຽກງານຫຼາຍດ້ານມີຜົນສຳເລັດ, ມີການກຳນົດແຜນການເຄື່ອນໄຫວວຽກງານຂອງຕົນຢ່າງເປັນລະບົບຕໍ່ເນື່ອງ ໃນແຕ່ລະເດືອນລະອຽດ, ມີລະບອບການສອງແສງລາຍງານຢ່າງເປັນປົກກະຕິ, ມີການຮ່ວມມືສະໜັບສະໜູນຈາກສະພາແຫ່ງຊາດ ແລະ ອຳນາດການປົກຄອງຂັ້ນຕ່າງໆຂອງແຂວງ ເພື່ອສ້າງສິ່ງເອື້ອອຳນວຍຄວາມສະດວກໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ.

ພ້ອມດຽວກັນນັ້ນ, ຄະນະປະຈຳ ສພຂ ຍັງໄດ້ກຳນົດແຜນວຽກທີ່ສຳຄັນ ເພື່ອສືບຕໍ່ເຄື່ອນໄຫວວຽກງານປະຈຳເດືອນກຸມພາ 2024 ເປັນຕົ້ນ ສືບຕໍ່ເຄື່ອນໄຫວພົບປະປະຊາຊົນ ແລະ ໂຄສະນາເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂອງ ສພຂ ສາລະວັນ ຊຸດທີ II; ສືບຕໍ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບຄຳຮ້ອງຂໍຄວາມເປັນທຳຂອງພໍ່ແມ່ປະຊາຊົນສະເໜີຕໍ່ສະພາ; ສືບຕໍ່ປະສານສົມທົບກັບພະແນກການ, ອົງການ, ເມືອງ ໃນການຮ່າງມະຕິສະເພາະ; ກະກຽມເປີດກອງປະຊຸມ ປະຈຳປີ 2023 ແລະ ວາງທິດທາງແຜນການ ປີ 2024 ຂອງຄະນະເລຂາທິການສະພາປະຊາຊົນແຂວງ ໃຫ້ສຳເລັດ; ກະກຽມເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນລະຫວ່າງ ສພຂ ຫຼວງນ້ຳທາ ແລະ ແຂວງສາລະວັນ.

**(ດີລຳພົນ ພົມມະຈັນ)**

# ສຳເລັດກອງປະຊຸມປະຈຳປີ 2023 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 9

(ສພຊ) ໃນວັນທີ 19 ມັງກອນຜ່ານມານີ້, ຢູ່ຫ້ອງປະຊຸມຫ້ອງວ່າການແຂວງຊຽງຂວາງ ໄດ້ສຳເລັດກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ 9 ແຂວງຊຽງຂວາງ ປະຈຳປີ 2023 ໂດຍການເປັນປະທານຂອງທ່ານ ບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງ; ໂດຍການເຂົ້າຮ່ວມຂອງທ່ານ ບຸນຈັນ ສີວົງພັນ ເຈົ້າແຂວງໆຊຽງຂວາງ; ມີບັນດາທ່ານການນຳຂອງແຂວງ, ຄະນະປະຈຳພັກແຂວງ, ຄະນະບໍລິຫານງານພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ບັນດາ ສສຊ ປະຈຳເຂດເລືອກຕັ້ງ,




ສະມາຊິກສະພາປະຊາຊົນແຂວງ (ສສຂ), ຫົວໜ້າ-ຮອງຫົວໜ້າພະແນກການ, ກົມກອງ, ອົງການຈັດຕັ້ງມະຫາຊົນ, ລັດວິສາຫະກິດ, ປັນຍາຊົນ ແລະ ພະນັກງານສະພາປະຊາຊົນແຂວງ.

ໂອກາດນີ້, ທ່ານ ວຽງໄຊ ສີວິໄຊ ຮອງປະທານສະພາປະຊາຊົນແຂວງ ໄດ້ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານ

ອ່ານຕໍ່ໜ້າ 7

# ສສຂ ຫຼວງພະບາງ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ຢູ່ເມືອງຊຽງເງິນ

(ສພຊ) ວັນທີ 14 ແລະ ວັນທີ 20 ກຸມພາ 2024, ທ່ານ ສິງຕັນ ໄຊລືຊົ່ງ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງຫຼວງພະບາງ ທັງເປັນສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງຊຽງເງິນ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ຢູ່ບ້ານຫ້ວຍແພງ, ບ້ານໜອງຄວາຍ ແລະ ສຳນັກເມືອງຊຽງເງິນ.

ສຳລັບຢູ່ບ້ານຫ້ວຍແພງ ແລະບ້ານໜອງຄວາຍ ປະກອບມີເປົ້າໝາຍເຂົ້າຮ່ວມຄື: ອົງການປົກຄອງບ້ານ, ເຖົ້າແກ່ແນວໂຮມ, ສະຫະພັນຍິງ ແລະ ປະຊາຊົນເຂົ້າຮ່ວມທັງໝົດ 100 ຄົນ ຍິງ 37 ຄົນ; ສ່ວນຢູ່ສຳນັກເມືອງຊຽງເງິນ ເຂົ້າຮ່ວມມີຄະນະປະຈຳພັກເມືອງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ການຈັດຕັ້ງບ້ານແລະປະຊາຊົນບ້ານປາກຂັນ, ຕາງໜ້າອົງການປົກຄອງ 5 ບ້ານຄື: ປາກແວດ, ສາມັກຄີໄຊ, ຊຽງເງິນ, ປາກທໍ່ ແລະ ໂຄງ ເຂົ້າຮ່ວມທັງໝົດ 155 ຄົນ ຍິງ 56 ຄົນ.

ການເຜີຍແຜ່ໃນຄັ້ງນີ້ ເພື່ອເຮັດໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ແລະເຂົ້າໃຈຢ່າງກວ້າງຂວາງ, ທົ່ວເຖິງ ກ່ຽວກັບຜົນສຳເລັດກອງປະຊຸມ, ຮັບປະກັນຄຸນນະພາບໃນການປະຕິບັດສິດ ແລະ ພາລະບົດບາດ ຂອງ ສສຂ ແລະ ກິງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ທັງເປັນການລົງຮາກຖານໃນການພົບປະປະຊາຊົນຜູ້ມີສິດເລືອກຕັ້ງ ເພື່ອຮັບຟັງຄຳຄິດຄຳເຫັນຂອງປະຊາຊົນ ແລະ ເກັບກຳສະພາບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ໃຫ້ນັບມື້ນັບມີຄວາມສັກສິດ ແລະ ເຂັ້ມງວດຍິ່ງໆຂຶ້ນ.

ໃນຕອນທ້າຍ, ທ່ານ ສິງຕັນ ໄຊລືຊົ່ງ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ຮຽກຮ້ອງໃຫ້ທຸກພາກສ່ວນ ໂດຍສະເພາະແມ່ນອົງການປົກຄອງເມືອງຊຽງເງິນ, ອົງການປົກຄອງບ້ານແລະປະຊາຊົນພາຍໃນບ້ານເປົ້າໝາຍດັ່ງກ່າວ ໃຫ້ມີຄວາມເຊື່ອໝັ້ນຕໍ່ການນຳພາ-ຊີ້ນຳຂອງພັກ, ສືບຕໍ່ປະຕິບັດຕາມແນວທາງນະໂຍບາຍຂອງພັກ ຕິດພັນກັບການຍົກສູງຄວາມຮັບຜິດຊອບ ປະກອບສ່ວນເຂົ້າໃນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ, ຂອງບ້ານ ໃຫ້ບັນລຸຕາມແຜນທີ່ວາງໄວ້;ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ເອົາໃຈໃສ່ແກ້ໄຂບັນຫາປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃຫ້ທັນກັບສະພາບການ ໂດຍສະເພາະການແກ້ໄຂບັນຫາຢາເສດຕິດໃຫ້ເຂັ້ມງວດ ແລະ ເດັດຂາດ ພ້ອມທັງ ສຸມໃສ່ແກ້ໄຂບັນຫາເສດຖະກິດຂອງແຕ່ລະຄອບຄົວໃຫ້ມີທ່າກ້າວ, ພັດທະນາດີຂຶ້ນກວ່າເກົ່າ ແລະ ເປັນເຈົ້າການຮ່ວມກັນປົກປັກຮັກສາຮີດຄອງປະເພນີອັນດີງາມຂອງເມືອງ, ຂອງບ້ານ ໃຫ້ມີຄວາມຍືນຍົງ.

**(ວິສະນຸ ເພັດສຸພັນ)**



# ສສຊ ແລະ ສສຂ ພົບປະຜູ້ມີສິດເລືອກຕັ້ງ ຢູ່ 3 ບ້ານ ເມືອງຊານໄຊ ແຂວງອັດຕະປື



(ສພຊ) ໃນລະຫວ່າງວັນທີ 19-20 ກຸມພາ 2024 ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ນຳໂດຍທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ ທັງເປັນປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ ພ້ອມດ້ວຍຄະນະ ສສຊ ປະຈຳເຂດເລືອກຕັ້ງ, ມີຫົວໜ້າໜ່ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ເຂດເລືອກຕັ້ງເມືອງ, ພະແນກການທີ່ກ່ຽວຂ້ອງຂອງແຂວງ, ໄດ້ເຄື່ອນໄຫວພົບປະປະຊາຊົນຜູ້ມີສິດເລືອກຕັ້ງຢູ່ 3 ບ້ານຄື: ໜອງໄກ່ໂອກ, ວັງຕັດນ້ອຍ ແລະ ວັງຕັດໃຫຍ່ ເມືອງຊານໄຊ ແຂວງອັດຕະປື ເຂົ້າຮ່ວມມີອຳນາດການປົກຄອງບ້ານ, ເຈົ້າໜ້າທີ່ປະຈຳດ່ານປະເພນີອູ່ 1, ທະຫານປະຈຳເຂດຈຸດສຸມວັງຕັດ ແລະ ພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງພາຍໃນສາມບ້ານເຂົ້າຮ່ວມຮັບຟັງ 200 ກວ່າຄົນ.

ໃນການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງສະພາບລວມໂດຍຫຍໍ້ຂອງ 3 ບ້ານດັ່ງກ່າວວ່າ: ບ້ານໜອງໄກ່ໂອກເປັນບ້ານໜຶ່ງທີ່ຂຶ້ນກັບເຂດຈຸດສຸມວັງຕັດ ເມືອງຊານໄຊ ແຂວງອັດຕະປື ເຊິ່ງມີໄລຍະຫ່າງຈາກເທສະບານເມືອງປະມານ 180 ກິໂລແມັດ ປະກອບມີ 130 ຫຼັງຄາເຮືອນ, ມີ 175 ຄອບຄົວ, ປະຊາກອນ 719 ຄົນ, ຍິງ 351 ຄົນ; ບ້ານວັງຕັດນ້ອຍມີພົນລະເມືອງທັງໝົດ 699 ຄົນ, ມີ 140 ຄອບຄົວ, ປະກອບມີ 111 ຫຼັງຄາເຮືອນ, ສຳລັບບ້ານວັງຕັດໃຫຍ່ ມີພົນລະເມືອງ 436 ຄົນ, 99 ຄອບຄົວ, ປະກອບມີ 70 ຫຼັງຄາເຮືອນ; ປະຊາຊົນສ່ວນໃຫຍ່ດຳລົງຊີວິດໂດຍການຖາງປ່າເຮັດໄຮ່ເປັນຫຼັກການປູກຝັງລ້ຽງສັດເປັນສຳຮອງ ພ້ອມທັງໄດ້ສະເໜີມາຍັງການຈັດຕັ້ງພັກ-ລັດ ເພື່ອຕອບສະໜອງຊີວິດການເປັນຢູ່ຂອງປະຊາຊົນຜ່ານສສຊ ແລະ ສສຂ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ເປັນຕົ້ນການພັດທະນາເສັ້ນທາງ, ຕັດຕາຜ້າບ້ານເພື່ອຈັດສັນ ແລະ ຂະຫຍາຍພື້ນທີ່ການປຸກສ້າງເຮືອນຂອງປະຊົນ, ການຈັດສັນເນື້ອທີ່ທຳການຜະລິດ ແລະ ດິນປຸກສ້າງ, ການສົ່ງເສີມວຽກງານກະສິກຳປູກຝັງ-ລ້ຽງສັດ,ປັບປຸງສ້ອມແປງໂຮງໝໍນ້ອຍຕອບສະໜອງຢາປິ່ນປົວໃຫ້ພຽງພໍ, ດ້ານວຽກງານການສຶກສາ ແລະ ບັນຫາອື່ນໆ ອີກຈຳນວນໜຶ່ງ.

ໂອກາດນີ້, ສສຊ ແລະ ສສຂ ຍັງໄດ້ຍົກເອົາບາງເນື້ອໃນຂອງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ອັດຕະປື ຊຸດທີ II ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມ ພ້ອມທັງໄດ້ໂອ້ລົມໃຫ້ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ສືບຕໍ່ຍຶດໝັ້ນຕໍ່ການນຳພາຂອງພັກ-ລັດ, ຮັກສາມູນເຊື້ອທີ່ຍາດມາໄດ້ໃນທ່າມກາງສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ ໃຫ້ສ້າງເງື່ອນໄຂເສດຖະກິດຄອບຄົວ ປູກຝັງ, ລ້ຽງສັດ ກຸ້ມຕົນເອງ ເປັນເຈົ້າຕົນເອງ ໃຫ້ມີການຜະລິດທີ່ໝັ້ນຄົງ ສາມາດຈຳໜ່າຍເປັນສິນຄ້າ, ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ ເຕົ້າໂຮມຄວາມສາມັກຄີປອງດອງເປັນປຶກແຜ່ນແໜ້ນໜາ, ຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆຢ່າງເປັນເຈົ້າການໃຫ້ມີຄວາມສະຫງົບປອດໄພ ສ່ວນຄຳສະເໜີຂອງອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ຈະໄດ້ນຳໄປຄົ້ນຄວ້າພິຈະລະນາປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຫາວິທີທາງແກ້ໄຂ.

**(ວິນັດ ສີສຸລາດ)**

## ສຳເລັດ...

(ຕໍ່ຈາກໜ້າ 6)

ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປີ 2024 ເຊິ່ງໃນໄລຍະ 1 ປີຜ່ານມາ, ຄະນະ ສສຊ ປະຈຳເຂດເລືອກຕັ້ງ ໄດ້ຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ຄະນະປະຈຳສະພາປະຊາຊົນແຂວງ ໄດ້ປະສານສົມທົບ, ປຶກສາຫາລືວຽກງານສຳຄັນຕ່າງໆ, ເປັນເອກະພາບສູງ ເປັນຕົ້ນ ຕັ້ງໜ້າຄົ້ນຄວ້າ, ປະເມີນ ແລະທາບທາມປະກອບຄຳເຫັນໃສ່ຮ່າງກົດໝາຍ ທີ່ສະພາແຫ່ງຊາດ ແລະ ບັນດາກະຊວງທີ່ກ່ຽວຂ້ອງສົ່ງໃຫ້, ຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ເພື່ອແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ບັນຫາຢາເສບຕິດ, ເປັນເຈົ້າການຊີ້ນຳ-ບັນຊາບັນດາອົງການຈັດຕັ້ງລັດທຸກຂັ້ນ ກໍຄືປະຊາຊົນລາວບັນດາເຜົ່າໃນທົ່ວແຂວງຊຽງຂວາງ, ການແກ້ໄຂໄພພິບັດທຳມະຊາດ ແລະ ວຽກງານອື່ນໆໄດ້ຮັບຜົນສຳເລັດຫຼາຍດ້ານ ແລະ ໃນທິດທາງແຜນການໃນຕໍ່ໜ້າ ແມ່ນຈະສືບຕໍ່ເປັນເຈົ້າການສົມທົບກັບສະພາປະຊາຊົນແຂວງ ຊຸກຍູ້ອົງການປົກຄອງແຂວງ, ບັນດາພະແນກການ, ອົງການຕຸລາການ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ເຜີຍແຜ່ລັດຖະທຳມະນູນ, ກົດໝາຍ, ນິຕິກຳລຸ່ມກົດໝາຍ ທີ່ກ່ຽວພັນກັບຂົງເຂດສະພາ, ຄົ້ນຄວ້າ, ປະກອບຄຳຄິດເຫັນໃສ່ບັນຫາສຳຄັນຕ່າງໆຕາມສິດ ແລະ ໜ້າທີ່ທີ່ຕົນຮັບຜິດຊອບ;ສືບຕໍ່ຊຸກຍູ້, ຕິດຕາມກວດກາຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳ ທີ່ຍັງຄ້າງແລະເຂົ້າມາໃໝ່ໃຫ້ໄດ້ຮັບການແກ້ໄຂທັນຕາມກຳນົດເວລາ; ຈາກນັ້ນ, ບັນດາຜູ້ແທນກອງປະຊຸມໄດ້ປະກອບຄຳເຫັນໃສ່ຮ່າງບົດສະຫຼຸບດັ່ງກ່າວຢ່າງມີຈຸດສຸມ ແລະ ກົງໄປກົງມາ ເພື່ອເຮັດໃຫ້ບົດສະຫຼຸບດັ່ງກ່າວມີເນື້ອໃນຄົບຖ້ວນ ແລະ ສົມບູນ ສາມາດນຳໄປຈັດຕັ້ງປະຕິບັດໄດ້ໃນຕໍ່ໜ້າ. ນອກນັ້ນ, ຍັງໄດ້ຮັບຟັງບົດສະຫຼຸບສັງລວມການລົງຕິດຕາມກວດກາ ແລະ ການຮັບບັນດາຄຳສະເໜີ, ຄຳເຫັນຂອງຜູ້ມີສິດເລືອກຕັ້ງຢູ່ກົມກອງ, ເມືອງ ແລະ ບັນດາບ້ານ ປະຈຳປີ 2023.

ໃນຕອນທ້າຍ, ທ່ານ ບຸນໂຮມ ເທດທານີ ໄດ້ມີຄຳເຫັນໂອ້ລົມຕໍ່ທີ່ປະຊຸມ ພ້ອມທັງຮຽກຮ້ອງມາຍັງຄະນະ ສສຊ ປະຈຳເຂດເລືອກຕັ້ງ, ຄະນະປະຈຳສະພາປະຊາຊົນແຂວງ, ອົງການປົກຄອງແຂວງ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ຈົ່ງເປັນເຈົ້າການໃນການຕິດຕາມກວດກາການປະຕິບັດໜ້າທີ່ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ, ບັນດາອົງການອຳນາດລັດ ຕາມສິດ ແລະ ໜ້າທີ່ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

**(ນາງ ສຸກສະຫວັນ ອິນທະແສງ)**



# ຮອງປະທານສະພາປະຊາຊົນແຂວງສາລະວັນ ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງຕະໂອ້ຍ



(ສພຊ) ວັນທີ 5 ກຸມພາ 2024, ທ່ານ ຂັນໄຊ ລັດຖະເຮົ້າ ຄະນະປະຈຳພັກແຂວງ, ຮອງປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ເຂດເລືອກຕັ້ງທີ 14 ທັງເປັນຮອງປະທານສະພາປະຊາຊົນແຂວງ ສົມທົບກັບສະມາຊິກສະພາປະຊາຊົນແຂວງ (ສສຂ) ເຂດເລືອກຕັ້ງປະຈຳເມືອງຕະໂອ້ຍ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະໂຄສະນາເຜີຍແຜ່ມະຕິຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງສາລະວັນ ຊຸດທີ II ຢູ່ທີ່ສະໂມສອນຂອງເມືອງຕະໂອ້ຍ ແຂວງສາລະວັນ; ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມຂອງທ່ານ ບຸນເພື້ອ ຫຼວງຄຳໄຕ ເລຂາພັກເມືອງ, ເຈົ້າເມືອງຕະໂອ້ຍ ພ້ອມດ້ວຍບັນດາທ່ານການນຳຂອງຫ້ອງວ່າການເມືອງ, ຄະນະກອງກໍ່ສ້າງຮາກຖານ, ຫົວໜ້າ-ຮອງຫົວໜ້າຫ້ອງການອ້ອມຂ້າງເມືອງ ແລະ ຄະນະພັກ, ນາຍບ້ານໃກ້ຄຽງ ເຂົ້າຮ່ວມ 80 ກວ່າຄົນ.

ໃນການພົບປະຜູ້ມີສິດເລືອກຕັ້ງຄັ້ງນີ້, ບັນດາທ່ານ ສສຊ ແລະ ສສຂ ໄດ້ໂຄສະນາ ແລະ ເຜີຍແຜ່ບັນດາເນື້ອໃນຂອງມະຕິຕ່າງໆທີ່ສຳຄັນ ຈາກການຄົ້ນຄວ້າ ແລະ ທີ່ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງສາລະວັນ ຊຸດທີII ເປັນຕົ້ນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ການຄົ້ນຄວ້າບັນຫາຕ່າງໆທີ່ລັດຖະບານ ແລະ ຂັ້ນທ້ອງຖິ່ນຈະຕ້ອງໄດ້ສືບຕໍ່ຫາທາງແກ້ໄຂເພື່ອໃຫ້ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນບັນດາເຜົ່າທົ່ວປະເທດ ໃຫ້ມີຄຸນນະສະພາບຊີວິດທີ່ດີຂຶ້ນ ແລະ ສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ; ຫຼັງຈາກນັ້ນ, ທ່ານປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ມີສິດເລືອກຕັ້ງ ໄດ້ແລກປ່ຽນປະກອບຄຳຄິດເຫັນ ແລະ ສະເໜີຄວາມຂັດຂ້ອງໜອງໃຈຕໍ່ການບໍລິຫານວຽກງານ ແລະ ບັນຫາຕິດພັນກັບຊີວິດການເປັນຢູ່ ໂດຍສະເພາະບັນຫາພື້ນຖານໂຄງລ່າງ ສະເໜີປັບປຸງສ້ອມແປງເສັ້ນທາງທຽວໄປມາໃຫ້ມີຄວາມສະດວກ, ຊ່ວຍຕິດຕັ້ງເສົາສັນຍານໂທລະສັບມືຖື, ເພີ່ມໂຄຕ້າລັດຖະກອນປະກອບໃຫ້ເມືອງ ແລະ ບັນຫາອື່ນໆ ສະເໜີຜ່ານຜູ້ແທນຂອງຕົນ ນຳໄປປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຊ່ວຍແກ້ໄຂບັນຫາໂດຍໄວ;

**(ດີລຳພົນ ພົມມະຈັນ)**

# ສຳເລັດການເຄື່ອນໄຫວພົບປະພໍ່ແມ່ປະຊາຊົນ ຜູ້ມີສິດເລືອກຕັ້ງຢູ່ເມືອງອະນຸວົງ ເຂດໂພນພະ



(ສພຊ) ໃນລະຫວ່າງວັນທີ 05-07 ກຸມພາຜ່ານມານີ້, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງແຂວງໄຊສົມບູນ ນຳໂດຍທ່ານ ແດງ ປະທຸມທອງ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 18, ປະທານສະພາປະຊາຊົນແຂວງໄຊສົມບູນ; ທ່ານ ນາງ ຄຳສີ ສິດທິວໍລະດາ ປະທານສະຫະພັນແມ່ຍິງແຂວງ ທັງເປັນສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງອະນຸວົງ ແລະ ທ່ານ ທອງພຽນ ກົງສະເດັດ ຮອງຫົວໜ້າກອງບັນຊາການ ປກສ ແຂວງໄຊສົມບູນ ທັງເປັນ ສສຂ ປະຈຳເຂດເລືອກຕັ້ງເມືອງ ພ້ອມດ້ວຍພະນັກງານຕິດຕາມຊ່ວຍວຽກຈຳນວນໜຶ່ງ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂອງສະພາປະຊາຊົນແຂວງໄຊສົມບູນ ຊຸດທີ II ຢູ່ເຂດບ້ານໂພນພະ ເຊິ່ງເຂົ້າຮ່ວມຮັບຟັງມີ 6 ບ້ານ ຄື: ໄຊຈະເລີນ, ມ່ວງສຸມ, ໂພນພະ, ຫີນຫົວເສືອ, ຫຼັກສິບແປດ, ຫຼັກຊາວສີ່ ແລະ 01 ກອງພັນ 435 (15) ເມືອງອະນຸວົງ ແຂວງໄຊສົມບູນ.

ການລົງເຄື່ອນໄຫວຄັ້ງນີ້, ບັນດາທ່ານ ສສຊ ແລະ ສສຂ ໄດ້ນຳເອົາວັດຖຸປັດໃຈ ແລະ ເນື້ອໃນເອກະສານທີ່ມີຄວາມໝາຍອັນສຳຄັນກໍຄືຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງໄຊສົມບູນ ຊຸດທີ II ເຊິ່ງທ່ານ ສສຊ-ສສຂ ໄດ້ໃຫ້ຮູ້ກ່ຽວກັບບັນຫາອັນພົ້ນເດັ່ນຕ່າງໆທີ່ປະທານປະເທດໄດ້ສະເໜີແຕ່ງຕັ້ງບຸຄະລາກອນຂັ້ນສູນກາງ, ຂັ້ນກະຊວງອ້ອມຂ້າງ ແລະ ລາຍງານບັນຫາທີ່ພົ້ນເດັ່ນ ທີ່ອົງການປົກຄອງແຂວງໄຊສົມບູນໄດ້ສະເໜີແຕ່ງຕັ້ງບຸຄະລາກອນຂອງແຂວງ ແລະບັນດາຜູ້ແທນໄດ້ຮັບຮອງເອົາ; ພ້ອມນັ້ນ, ຍັງໄດ້ມີຄຳເຫັນໂອ້ລົມໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າໃຊ້ຊີວິດຢ່າງມີສະຕິ ຈົ່ງພ້ອມກັນປະຢັດມັດທະຍັດ, ສ້າງເສດຖະກິດຄອບຄົວຕົນເອງກຸ້ມຕົນເອງ, ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ ພ້ອມກັນພັດທະນາບ້ານ, ເມືອງ ກໍຄືແຂວງ ໃຫ້ມີຄວາມຈະເລີນ.

ພາຍຫຼັງທີ່ບັນດາທ່ານ ສສຊ ແລະ ສສຂ ລາຍງານບົດຕ່າງໆທີ່ກ່າວມາຂ້າງເທິງແລ້ວ ພໍ່ແມ່ປະຊາຊົນບັນດາເຜົ່າຈຳນວນ 6 ບ້ານ ໄດ້ມີຄຳສະເໜີຕໍ່ຜູ້ແທນ ເປັນຕົ້ນ ບັນຫາປາກົດການຫຍໍ້ທໍ້ທາງສັງຄົມທີ່ເພີ່ມຂຶ້ນເລື້ອຍໆ, ການດຳລົງຊີວິດຂອງປະຊາຊົນພົບຄວາມຫຍຸ້ງຍາກ, ການປະລະການຮຽນ, ລູກຫຼານທີ່ຮຽນຈົບວິຊາຊີບ ບໍ່ມີວຽກເຮັດງານທຳ, ການໄປເຮັດວຽກຢູ່ຕ່າງປະເທດ, ບັນຫາການຂາດເຂີນໄຟຟ້າ ແລະ ນ້ຳບໍ່ພໍໃຊ້ ເພື່ອໃຫ້ບັນດາທ່ານ ສສຊ ແລະ ສສຂ ນຳສະເໜີພາກສ່ວນທີ່ກ່ຽວຂ້ອງແກ້ໄຂຕາມຄວາມເໝາະສົມ.

**(ນາງ ອຳໄພພອນ ແກ້ວວິໄລ)**

# ສສຊ ອັດຕະປື ຕິດຕາມກວດກາການຫັນປ່ຽນທີ່ດິນປ່າໄມ້ທຳມະຊາດ ໄປເປັນດິນອຸດສາຫະກຳ

(ສພຊ) ໃນວັນທີ 12 ກຸມພາ 2024 ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ໄດ້ເຄື່ອນໄຫວຕິດຕາມກວດກາກ່ຽວກັບການຫັນປ່ຽນເນື້ອທີ່ດິນປ່າໄມ້ທຳມະຊາດ ໄປເປັນທີ່ດິນອຸດສາຫະກຳ ໃນເຂດປ່າຜະລິດແຫ່ງຊາດ ນ້ຳກົງ ຢູ່ເມືອງພູວົງ ເພື່ອນຳໃຊ້ເຂົ້າໃນໂຄງການຂຸດຄົ້ນບໍ່ແຮ່ຫີນ ປາໂກດິດ ແລະ ຫີນປະດັບຂອງບໍລິສັດພັດທະນາຫີນປາໂກດິດ ອັດຕະປື ຈຳກັດຜູ້ດຽວ. ເຊິ່ງໄດ້ຈັດກອງປະຊຸມຂຶ້ນຢູ່ທີ່ສະໂມສອນບ້ານ ຄຳວົງສາ ເມືອງພູວົງ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປື ທັງເປັນປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ, ມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງ, ຄະນະປະຈຳ, ຄະນະກຳມະການຂອງສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນປະຈຳເຂດເລືອກຕັ້ງເມືອງ, ຄະນະນຳຂອງເມືອງ, ຜູ້ຕາງໜ້າບໍລິສັດພັດທະນາຫີນປາໂກດິດ ອັດຕະປື ຈຳກັດຜູ້ດຽວ, ຂະແໜງການຂອງແຂວງ ແລະ ເມືອງ ພ້ອມດ້ວຍອຳນາດການປົກຄອງບ້ານທີ່ກ່ຽວຂ້ອງເຂົ້າຮ່ວມ.



ທ່ານ ເຄນໝັ້ນ ໄຊຍະທອນ ຫົວໜ້າບໍລິຫານງານພາກສະໜາມ ຕາງໜ້າບໍລິສັດ ພັດທະນາຫີນປາໂກດິດ ອັດຕະປື ຈຳກັດຜູ້ດຽວ ໄດ້ລາຍງານສະພາບລວມໂດຍຫຍໍ້ໃຫ້ຊາບວ່າ: ເຂດສຳປະທານເພື່ອການສຳຫຼວດຫີນອ່ອນປາໂກດິດ ແລະ ຫີນປະດັບ ມີເນື້ອທີ່ທັງໝົດ 7,44 ກິໂລຕາແມັດ, ໃນພື້ນທີ່ເຂດປ່າຜະລິດແຫ່ງຊາດນ້ຳກົງຢູ່ເຂດບ້ານຄຳວົງສາ ເມືອງພູວົງ ແຂວງອັດຕະປື ຫ່າງຈາກເທສະບານເມືອງ 25 ກິໂລແມັດ, ດ້ານພື້ນຖານໂຄງລ່າງເບື້ອງຕົ້ນຂອງບໍລິສັດໄດ້ປຸກສ້າງແຄ້ມຊົ່ວຄາວ 1 ຫຼັງ, ສາງເກັບມ້ຽນຕົວຢ່າງ 1 ຫຼັງ, ບຸກເບີກ, ສ້ອມແປງ ແລະ ທະລຸເສັ້ນທາງໄດ້ປະມານ 23 ກິໂລແມັດ, ມີທີມງານສຳຫຼວດປະຕິບັດວຽກງານຕົວຈິງໃນພາກສະໜາມປະກອບມີ ວິຊາການ, ພະນັກງານບໍລິຫານ ຈຳນວນ 18 ຄົນ. ພ້ອມກັນນັ້ນ, ຍັງໄດ້ຮັບຟັງການລາຍງານຈາກຂະແໜງການທີ່ກ່ຽວຂ້ອງ ແລະ ໄດ້ປຶກສາຫາລືແລກປ່ຽນ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຢັ້ງຢືນຄວາມຊັດເຈນເນື້ອທີ່ດິນສຳປະທານ, ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ແລະ ບັນຫາອື່ນໆທີ່ອາດຈະເກີດຂຶ້ນຈາກການພັດທະນາຂອງໂຄງການ ແລະ ເພື່ອຮັບປະກັນໃຫ້ໂຄງການດຳເນີນໄປດ້ວຍຄວາມຖືກຕ້ອງ ຕາມຂັ້ນຕອນ, ຫຼັກການ ບົນພື້ນຖານລະບຽບກົດໝາຍ, ຮັກສາສິດຜົນປະໂຫຍດພາກລັດ, ໂຄງການ ແລະ ປະຊາຊົນ ໃຫ້ສົມເຫດ, ສົມຜົນ ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້ ໃນແຕ່ລະໄລຍະຂອງການພັດທະນາໂຄງການ ແນໃສ່ສ້າງຄວາມເປັນເອກະພາບສູງໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ໃນຕອນທ້າຍ, ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ມີຄຳເຫັນໂອ້ລົມ ແລະ ກ່າວສະແດງຄວາມຊົມເຊີຍຕໍ່ຂະແໜງການທີ່ກ່ຽວຂ້ອງ ແລະ ບໍລິສັດທີ່ສະໜອງຂໍ້ມູນຮອບດ້ານໃຫ້ແກ່ຄະນະທີມງານທີ່ມາຕິດຕາມກວດກາໃນຄັ້ງນີ້ ແລະ ສະເໜີໃຫ້ຂະແໜງການກ່ຽວຂ້ອງເອົາໃຈໃສ່ຄວາມຮັບຜິດຊອບຂອງຕົນ, ຕິດຕາມກວດກາ, ເກັບກຳຂໍ້ມູນ ແລະ ມີມາດຕະການຢ່າງເຂັ້ມງວດ ໃນເຂດຂຸດຄົ້ນຂອງບໍລິສັດໃຫ້ຖືກຕ້ອງສອດຄ່ອງຕາມຂັ້ນຕອນແລະລະບຽບກົດໝາຍ, ໂຄສະນາເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນຮັບຮູ້ແລະເຂົ້າໃຈໃນການພັດທະນາຂອງໂຄງການ, ເອົາໃຈໃສ່ໃນຕໍ່ໜ້າເຝິກອົບເພື່ອພັດທະນາສີມືໃຫ້ແກ່ແຮງງານ ແລະ ປະຕິບັດພັນທະຕາມກົດໝາຍກຳນົດ ກໍຄື ໃຫ້ຮັບປະກັນ 3 ຜົນປະໂຫຍດ ເປັນຕົ້ນຜົນປະໂຫຍດລວມຂອງຊາດ, ຜົນປະໂຫຍດຂອງຜູ້ລົງທຶນ ແລະ ຜົນປະໂຫຍດຂອງທ້ອງຖິ່ນ ແລະ ເພີ່ມທະວີດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອບໍ່ໃຫ້ມີປະກົດການຫຍໍ້ທໍ້ຕ່າງໆທີ່ອາດຈະເກີດຂຶ້ນ.

**(ວິມັດ ສີສຸລາດ)**




# ໄມ້ລຳດຽວລ້ອມຮົ້ວບໍ່ໄດ່ ໄພ່ບໍ່ພ້ອມແປງບ້ານບໍ່ເຮືອງ

# ດົ້ນກົບເມກ

ສຸພາສິດລາວບູຮານ ມັນຈະເກີດສະໄໝໃດກໍຕາມ ແຕ່ຖ້າມັນເປັນສັດຈະທຳ ມັນກໍຍັງໃຊ້ເປັນບົດຮຽນໃນການສ້າງຄອບຄົວໃຫ້ໝັ້ນຄົງ; ເມື່ອເວົ້າເຖິງຄວາມສາມັກຄີໃນໂຕຄົນເຮົາ ເຖິງແມ່ນວ່າຈະມີຄວາມຄິດຕ່າງກັນກໍຕາມ ແຕ່ມີຫຼັກການລົງມືປະຕິບັດອັນດຽວກັນ ເຊິ່ງໝາຍຄວາມວ່າ: ມີຄວາມຄິດຫຼັກ ເປົ້າໝາຍອັນດຽວກັນ, ເວົ້າໄປໃນທາງດຽວກັນ ແລະ ປະຕິບັດໄປແລວດຽວກັນເວົ້າໃຫ້ງ່າຍກໍຄື ກາຍສາມັກຄີ ໃຈສາມັກຄີ, ວາຈາສາມັກຄີ.

ຄວາມສາມັກຄີມັນກິນຄວາມໝາຍເລິກໃນວິຖີຊີວິດ ຖ້າຄົນເຮົາຢູ່ຮ່ວມກັນປຽບຄືຄອບຄົວດຽວກັນ ທຸກຄົນຕ້ອງໄດ້ກິນຢູ່ພ້ອມພຽງສະເໝີພາບກັນເອີ້ນວ່າຄວາມຍຸຕິທຳ ຈຶ່ງຈະເຮັດໃຫ້ຄວາມສາມັກຄີເກີດຂຶ້ນໄດ້ ຖ້າວ່າໃນຄອບຄົວໜຶ່ງ ພໍ່ແມ່ຫົວໜ້າຄອບຄົວ ປົກຄອງລູກຫຼານບໍ່ຍຸຕິທຳ ມັນຈະເຮັດໃຫ້ເກີດການແຕກແຍກສາມັກຄີທາງຄວາມຄິດ ເຂົ້າທຳນອງທີ່ວ່າ: ເຈົ້າໄດ້ຫຼາຍຂ້ອຍໄດ້ໜ້ອຍ ຄວາມຍຸຕິທຳຈຶ່ງເປັນບໍ່ເກີດຄວາມສາມັກຄີ ດັ່ງນັ້ນ, ເວລາປະຕິບັດໜ້າທີ່ ຖ້າວ່າແຕ່ລະຄົນຫາກມີການກິນຢູ່ສະເໝີພາບກັນ ແຕ່ລະຄົນກໍຈະຕັ້ງໃຈເຮັດໜ້າທີ່ຂອງຕົນ.

ພວກເຮົາລອງມາສັງເກດເບິ່ງວ່າ ການໃຊ້ໄມ້ລຳດຽວເຮັດຮົ້ວຍ່ອມເປັນການຍາກທີ່ຈະອ້ອມເຮັດສວນໄດ້ ຈຶ່ງຕ້ອງອາໄສໄມ້ຫຼາຍລຳຄືກັນກັບການສ້າງຄອບຄົວໃຫ້ໝັ້ນຄົງຖາວອນ ຫຼື ສ້າງສັງຄົມໃຫ້ຈະເລີນກ້າວໜ້າຕ້ອງໄດ້ອາໄສພະລັງປັນຍາຄວາມຄິດຂອງໝູ່ຄະນະແລະຄວາມສາມັກຄີຂອງມະຫາຊົນຢ່າງຈິງໃຈ ຖ້າວ່າຂາດພະລັງປັນຍາ ທຸ້ມເທແກ້ໄຂວຽກງານຍ່ອມສຳເລັດໄດ້ຍາກ; ຂາດຄວາມຈິງໃຈ ເຮັດໃຫ້ພໍແລ້ວຮີດແລ້ວໜ້າທີ່ ກໍບັນລຸເປົ້າໝາຍຍາກ ດັ່ງນັ້ນ, ການສ້າງຄວາມສາມັກຄີມັນບໍ່ງ່າຍຢ່າງທີ່ບາງຄົນເຄີຍຄິດ.

ສັງລວມວ່າ: ໃນການປະຕິບັດໜ້າທີ່ວຽກງານຕ້ອງສຳຄັນຄວາມສາມັກຄີ ທາງຄວາມຄິດ-ການເວົ້າ ແລະ ການກະທຳສອດຄ່ອງກັນ, ຄວາມສຳເລັດຂອງຄອບຄົວ, ສັງຄົມກໍເຊັ່ນດຽວກັນ ເພາະທຸກວຽກງານຖ້າຂາດຄວາມຍຸຕິທຳ, ຄວາມສາມັກຄີແລ້ວສຳເລັດໄດ້ຍາກ.






# ເກືອກກົ້ວ - ໝົກໝົ້ນ - ຄຸກຄີ

'ເກືອກກົ້ວ', 'ໝົກໝົ້ນ' ແລະ 'ຄຸກຄີ' ເປັນສາມຄຳທີ່ມີຄວາມໝາຍໃກ້ຄຽງກັນ ແຕ່ມີການໃຊ້ແຕກຕ່າງກັນດັ່ງນີ້:

'ເກືອກກົ້ວ' ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ 'ເກືອກ' ໝາຍເຖິງ "ກົ້ວ, ຄຸກຄີ, ກົ້ງກັບໄປກັບມາ" ແລະ 'ກົ້ວ' ໝາຍເຖິງ "ຄຸກຄີ, ຄົບຫາ".

ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ເກືອກກົ້ວ' ກໍໝາຍເຖິງ "ເຮັດໃຫ້ມົວໝອງ, ເຮັດໃຫ້ເປື້ອນເປິ" ເຊັ່ນ

- ແມ່ຖາມແອນ້ອຍວ່າ "ໂສ້ງເສື້ອລູກ ໄປເກືອກກົ້ວຫຍັງມານໍ ຈຶ່ງເປື້ອນເອົາແທ້ເອົາວ່າ ?"

'ເກືອກກົ້ວ' ຍັງມັກໃຊ້ໃນຄວາມໝາຍທາງສັງຄົມ ທີ່ໝາຍເຖິງ "ຄົບຫາສະມາຄົມ, ມົວສຸມ, ພົວພັນ, ຫຍຸ້ງກ່ຽວ" ເຊັ່ນ

- ຢ່າໄປເກືອກກົ້ວກັບຄົນພານ.
- ລາວເກືອກກົ້ວນຳອະບາຍະມຸກຈຶ່ງພາໃຫ້ລາວຕົກຕ່ຳ.
- ຍ້ອນເກືອກກົ້ວນຳສານເສບຕິດ ຈຶ່ງເຮັດໃຫ້ສຸຂະພາບຂອງລາວຊຸມໂຊມ.

'ໝົກໝົ້ນ' ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ 'ໝົກ' ໝາຍເຖິງ "ລີ້, ຢູ່ໃນບ່ອນທີ່ອັບເອົ້າ" ແລະ 'ໝົ້ນ' ໝາຍເຖິງ "ເອົາຫົວດຸດເຂົ້າ, ບຸ່ນເຂົ້າຫຼືອອກ".

ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ໝົກໝົ້ນ' ກໍໝາຍເຖິງ "ສຸມໃສ່ແຕ່ເລື່ອງດຽວໂດຍບໍ່ສົນໃຈເລື່ອງອື່ນໆ" ເຊັ່ນ

- ລາວໝົກໝົ້ນຢູ່ກັບໜ້າວຽກທີ່ລາວຮັບຜິດຊອບ.
- ຢ່າໝົກໝົ້ນຢູ່ກັບອະບາຍະມຸກຫຼາຍ.
- ບາງຄົນກໍໝົກໝົ້ນຢູ່ນຳການຫຼິ້ນເກມ ພາໃຫ້ເສຍການຮ່ຳການຮຽນ.

'ໝົກໝົ້ນ' ນີ້ ບາງຄົນອາດຈະອອກສຽງເປັນ 'ໝົກໝຸ້ນ', 'ໝົກມຸ່ນ' ກໍມີ ສ່ວນໃນພາສາໄທຈະອອກສຽງວ່າ 'ໝົກມຸ້ນ' (**หมกมุ่น**) ເຊິ່ງກໍມີຄວາມໝາຍອັນດຽວກັນ.

'ຄຸກຄີ' ເປັນຄຳກິລິຍາຈາກເຄົ້າພາສາໄທ ເຊິ່ງອອກສຽງວ່າ 'ຄລຸກຄລີ' (**คลุกคลี**) ຄຳນີ້ເຫັນມີບັນທຶກຢູ່ໃນວັດຈະນານຸກົມລາວ-ຝຣັ່ງ ປີ 1970 ແລະວັດຈະນານຸກົມລາວ-ອັງກິດ ປີ 1972 ໝາຍເຖິງ "ໃຊ້ເວລາຢູ່ນຳຫຼືສົນໃຈຢູ່ນຳສິ່ງໃດສິ່ງໜຶ່ງ" ເຊັ່ນ

- ລາວຄຸກຄີຢູ່ນຳການອ່ານປຶ້ມມາແຕ່ສະໄໝເດັກນ້ອຍ.
- ອ້າຍອ້ອດຄຸກຄີຢູ່ນຳວຽກໄຮ່ການນາ.

'ຄຸກຄີ' ຍັງໝາຍເຖິງ "ເຂົ້າໃກ້ຊິດສະໜິດສະໜົມນຳ" ເຊັ່ນ

- ຢ່າໄປຄຸກຄີກັບຄົນບໍ່ດີ.
- ປ້າແດງຄຸກຄີຢູ່ກັບເດັກນ້ອຍຕັ້ງແຕ່ສະໄໝເປັນຄູອະນຸບານ.




# ວິທີເຮັດວຽກ

**ພາກທີ 5**
**ບັນຫາວິທີເຮັດວຽກ**

**4. ຕ້ອງຍົກຍໍຫົວຄິດປະດິດສ້າງ ແລະ ນ້ຳໃຈຂະຫຍັນຫ້າວຫັນ.**

ພວກເຮົາກໍມັກຕັ້ງບັນຫາຂຶ້ນມາແລ້ວ, ແຕ່ວ່າມາເຖິງດຽວນີ້ພະນັກງານ ແລະ ສະມາຊິກພັກຂອງພັກ ກໍຍັງມີຫົວຄິດປະດິດສ້າງໜ້ອຍ ແລະ ມີໜ້ອຍຄວາມຂະຫຍັນຫ້າວຫັນ,ມັນເປັນຍ້ອນຫຍັງຈຶ່ງເປັນແນວນັ້ນ.

ມັນເປັນຍ້ອນເຫດຜົນຫຼາຍຢ່າງຄື: ວິທີນຳພາຂອງພວກເຮົາຍັງບໍ່ເປັນປະຊາທິປະໄຕແທ້ ວິທີເຮັດວຽກຂອງພວກເຮົາຍັງບໍ່ທັນໄດ້ຕັ້ງໜ້າເຮັດ ຖ້າມີຜູ້ໃດເວົ້າວ່າພວກເຮົາ ກໍບໍ່ຍອມໃຫ້ເຂົາເວົ້າ ແຕ່ຖ້າວ່າເຮົາເວົ້າ ເບິ່ງຕົນເອງໃຫ້ລະອຽດຖີ່ຖ້ວນແລ້ວ ພວກເຮົາກໍຈະເຫັນໄດ້ວ່າ ພວກເຮົາບໍ່ເປັນປະຊາທິປະໄຕແທ້. ສຳລັບອົງການນຳ, ສຳນັກງານອົງການນຳ, ສຳລັບຕົວຜູ້ນຳແລ້ວ ສະມາຊິກ, ພະນັກງານມີຄວາມເວົ້າກໍບໍ່ກ້າເວົ້າ ແມ່ນວ່າຢາກຕຳໜິກໍຢ້ານບໍ່ກ້າຕຳໜິ.

ອ່ານຕໍ່ສະບັບໜ້າ...



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ແຮ່ງຽນແຮ່ງເກົ່າ | ແຫ່ງຽນແຫ່ງເກົ່າ |
| ວິລະຊົນແຫ່ງຊາດ | ວິລະຊົນແຮ່ງຊາດ |
| ຂາດຕົກບົກພ່ອງ | ຂາດຕົກບົກຜ່ອງ |
| ບໍລິສຸດຜຸດຜ່ອງ | ບໍລິສຸດຜຸດພ່ອງ |
| ຫົວໃຈຍັງອ່າງ | ຫົວໃຈຍັງຫວ່າງ |
| ຫວ່າງປີກາຍນີ້ | ອ່າງປີກາຍນີ້ |
| ອອກແນ່ແຜ່ລູກ | ອອກແນ່ແພ່ລູກ |
| ແຜ່ປັດໃຈ | ແພ່ປັດໃຈ |



## ສຸກສະບາຍທາຍໂລດ

# ຄຸນປະໂຫຍດຂອງນໍ້າໝາກກ້ຽງ

ໂດຍ: ທິວກະທິ



ໝາກກ້ຽງເປັນນໍ້າໝາກໄມ້ຊະນິດໜຶ່ງທີ່ມີກິ່ນຫອມ, ກິນງ່າຍ ແລະ ໃນນໍ້າໝາກກ້ຽງເຕັມໄປດ້ວຍວິຕາມິນ, ແຮ່ທາດ ແລະ ສານອາຫານທີ່ສຳຄັນອີກຫຼາຍຢ່າງ ເປັນຕົ້ນແມ່ນ ວິຕາມິນ C, ວິຕາມິນ A, ວິຕາມິນ B, ວິຕາມິນ D ແລະ ທາດເຫຼັກ. ສະນັ້ນ, ນໍ້າໝາກກ້ຽງຈຶ່ງເປັນໜຶ່ງໃນນໍ້າໝາກໄມ້ທີ່ໄດ້ຮັບຄວາມນິຍົມໄປໃນທົ່ວໂລກ ໂດຍສະເພາະຜູ້ຍິງທີ່ຮັກສາສຸຂະພາບ ແລະ ບຳລຸງຜິວ ແຕ່ນອກຈາກຄຸນປະໂຫຍດໃນດ້ານຂອງການບຳລຸງຜິວແລ້ວ ນໍ້າໝາກກ້ຽງຍັງມີຄຸນປະໂຫຍດທີ່ຫຼາກຫຼາຍເຊັ່ນ:

- ຊ່ວຍໃນການບຳລຸງຜິວ ແລະ ຊ່ວຍເສີມສ້າງກະດູກໃຫ້ແຂງແຮງ.

- ຊ່ວຍບຳລຸງສາຍຕາ, ເສັ້ນຜົມ, ລະບົບໄຫຼວຽນຂອງເລືອດ ແລະ ບຳລຸງຫົວໃຈ, ຊ່ວຍຫຼຸດຄວາມສ່ຽງການເກີດໂລກຫົວໃຈແລະໂລກຫຼອດເລືອດຫົວໃຈຕີບ ພ້ອມທັງຊ່ວຍຫຼຸດຄວາມດັນໃນເລືອດ.

- ຊ່ວຍສ້າງພູມຄຸ້ມກັນ ແລະ ຫຼຸດຄວາມສ່ຽງການເກີດໂຣກມະເຮັງ

- ຊ່ວຍກະຕຸ້ນການເຮັດວຽກຂອງລະບົບຂັບຖ່າຍ.

ນອກຈາກນັ້ນ, ນໍ້າໝາກກ້ຽງຍັງເຮັດໃຫ້ຮ່າງກາຍມີພູມຄຸ້ມກັນພະຍາດຕ່າງໆທີ່ສູງຂຶ້ນ ແລະ ຍັງເຮັດໃຫ້ຜິວມີສຸຂະພາບດີ. ເມື່ອຮູ້ໄດ້ວ່ານໍ້າໝາກກ້ຽງມີຄຸນປະໂຫຍດຫຼາຍແບບນີ້ ທຸກຄົນຢ່າລືມກິນນໍ້າໝາກກ້ຽງເດີ້ ແຕ່ຄວນກິນໃນປະລິມານທີ່ພໍດີກັບຄວາມຈຳເປັນຂອງຮ່າງກາຍ.

**ຂໍ້ມູນຈາກ:**
**www.laopost.com**



## ຫົກຫາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

✻ **ກຸມພາ**ກຽມຜ່ານພົ້ນ **ມີນາ**ຍ່ອງຍາມເຢືອນ **ໃນເດືອນມີຫຼາຍງານ** ວຽກສຳຄັນຂອງຊາດ **8 ມີນາ**ໂລກາກ້ອງ ກຽມສະຫຼອງກັບເບື້ອງບັນທຶດ **ທີ 22** ແມ່ນມື້ **ວັນສ້າງຕັ້ງພັກ**ປະຊາ ທັງ **21 ມີນາ**ພ່າພ້ອມ ນັ້ນຮັບໃຫຍ່ທີ່ຝັງໃຈ ວິລະກຳຫຼວງຫຼາຍ ໄພ່ປະຊາລາວຮູ້ ເປັນບົດຮຽນສອນໃຫ້ ຄົນຮຸ່ນຫຼັງຕາມໄຕ່ ຈຳຝັງໃຈຮັບຮູ້ ສານສ້າງສືບໄປ **ນັ້ນແລ້ວ!**

✻ **ຮ່ວມ**ເຊີຍ ວັນແມ່ຍິງສາກົນ ຄົບຮອບ **104 ປີ**ທີ່ຈະມາເຖິງນີ້ **(08/03/1910-8/03/2024)** ເນື່ອງໃນໂອກາດນີ້ ຂໍໃຫ້ແມ່ຍິງທຸກທ່ານຈົ່ງມີຄວາມສຸກ ປາສະຈາກໂຣກໄພໄຂ້ເຈັບນາໆປະການ ຜິວພັນຜຸດຜ່ອງເນື້ອ ຊີວາຊື່ນສົດໃສ **ທຸກທ່ານເນີ!** ປາຖະໜາແນວໃດ ໃຫ້ທ່ານສົມພະໄນນຸ້ງ ຂໍໃຫ້ເງິນຄຳແກ້ວ ເຕັມຖົງລົ້ນອັ່ງ ສຸກສົມຫວັງລາບລື້ນ ໂດຍດ້ານດັ່ງປະສົງ **ນັ້ນແລ້ວ!**

## 🤗 ຊວນຍິ້ມ 🤗

# ແອ່ນຕຸ້ງ

### ເລື່ອງ: ຄືປາກກາ

ມີສາວນ້ອຍຄົນໜຶ່ງ ຕ້ອງການຢ່າຮ້າງກັບຜົວທີ່ສຸດ ຈຶ່ງໄປຫາສານ ສານຈຶ່ງຖາມວ່າ: "ເປັນຫຍັງເຈົ້າຈຶ່ງຢາກຮ້າງກັບຜົວ" ເມື່ອຖືກຖາມ ລາວກໍໜ້າແດງ ແລະ ມິດໄປບຶດໜຶ່ງ ແລ້ວຕອບວ່າ "ມັນບອກບໍ່ຖືກ" ດ້ວຍຄວາມເຫັນໃຈ ສານຈຶ່ງຍື່ນປາກກາໃຫ້ເພື່ອຂຽນ ແຕ່ປາກກາດ້າມນັ້ນພັດຂຽນບໍ່ອອກ ສານຈຶ່ງຂີປ່ຽນໃຫ້ ແຕ່ສາວນ້ອຍຄົນນັ້ນເວົ້າຂັດຂຶ້ນວ່າ: "ບໍ່ເປັນຫຍັງ ປາກກາດ້າມນີ້ກະຄ້າຍຄືກັນກັບຜົວຂ້ອຍ" ????



### ຄະຕິເຕືອນໃຈ

**#ດອກຫຍ້າ**

ເຮືອນໃດຍາມກິນເຂົ້າ ພາດຽວເປັນໝູ່
ຄ່າຮັກຍັງຊ່າງຕຸ້ມ ກັບໄວ້ອື່ນອະສົງ




## ຄຳດີທີ່ແມ່ສອນ

**# ຫຼານເຈົ້ານ້ອຍ**

✻ ແຮກເກີດຄົນຫໍ່ຫຸ້ມ
ນອນນັ່ງຄົນຄອຍໂຊມ
ຍາມກິນມາດາປ້ອນ
ລູກຍິງແຫນຫ່ວງແຫ້

ແຫນແຫ່ອອນຊອນ
ເຈ່ຍອອງອອຍອູ້ມ
ນິມຫອມຫວານຍິ່ງ
ເກີນແກ້ວໜ່ວຍຕາ

✻ ສອງສາມປີຜ່ານພົ້ນ
ພາສາຄົນມາດາພຽນ
ເອົາແຕ່ຄວາມດີໄວ້
ບໍ່ເຄີຍສອນສິ່ງຊົ່ວ

ພວມຮ່ຳຮຽນຈາ
ສັ່ງສອນວອນເວົ້າ
ໃນສະໝອງແພງອ່ອນ
ຄຳປ້ອຍດ່າປະຈານ

✻ ພໍອາຍຸຍ່າງເຂົ້າ
ບຸດຕີມີຊຸມຊາຍ
ມາຜູກໄມຕີແໜ້ນ
ລືມແມ່ຄົນທີ່ລ້ຽງ

ໄວໜຸ່ມພໍດີ
ໜຸ່ມຄະນອງປອງເຂົ້າ
ເປັນແຟນແຫນແຫ່
ຕົນເຈົ້າຜ່ານມາ

✻ ພາສາຄົນແມ່ໃຊ້
ກາຍເປັນພາສາເດຍລະສານ
ຄຳເວົ້າອັນຫວານຊຶ້ງ
ກັບເປັນຄຳຫຍາບຊ້າ

ສອນລູກວັນວານ
ຖິ່ນແດນດິນຖໍ້າ
ມາດາເຄີຍສອນສັ່ງ
ມາໂຕ້ຕອບຄືນ

✻ ຄິດຂຶ້ນມາແມ່ໄຫ້
ຄັນຈະປົງໃຈລືມ
ລູກພົມໃຈໃນໄສ້
ລຳບາກໃຈຊອກຊໍ້າ

ໃຈຂື່ນມຶນງົງ
ເລີກລາໄລຖິ້ມ
ຂອງຕົນກໍແສນຍາກ
ລະກຳເສົ້າໝົ່ນໝອງ

✻ ແມ່ນີ້ລໍລູກຫຼ້າ
ເປັນທິດາຄົນເດີມ
ຖ້ອຍຄຳສຳນວນເວົ້າ
ໃຫ້ນາງພຽນໝັ່ນເວົ້າ

ນາງຕ່າວຄືນມາ
ດັ່ງຍາມຍັງນ້ອຍ
ຍາມເຍົາເຄີຍສອນສັ່ງ
ຢ່າໄລຖິ້ມປ່ອຍວາງ

✻ ໃຫ້ເຈົ້າຫາຊອກສ້າງ
ປະເພນີລາວເຮົາ
ລູກພົມໃຈສາວຫຼ້າ
ຢ່າວິກວຽນແວ່ເຂົ້າ ເອົາຕົນໄປເກືອກກົ້ວ

ທຳແຕ່ຄວາມດີ
ຢ່າໄລລາຖິ້ມ
ຂວັນຊີວາຂອງແມ່
ເມົາມົ້ວສິ່ງບໍ່ດີ ແພງເອີຍ!




ລັດຖະສະພາຕ່າງປະເທດ

# ເກຣັກ ຜ່ານກົດໝາຍການແຕ່ງງານເພດດຽວກັນ-ການຮັບລ້ຽງລູກບຸນທໍາ



*ລັດຖະສະພາເກຣັກ ໄດ້ລົງຄະແນນສຽງຮັບຮອງຮ່າງກົດໝາຍທີ່ກໍານົດໃຫ້ການແຕ່ງງານຂອງເພດດຽວກັນ ແລະ ການຮັບລ້ຽງລູກບຸນທໍາຖືກຕ້ອງຕາມກົດໝາຍ, ຖືເປັນການປະຕິຮູບຄັ້ງສໍາຄັນທີ່ໄດ້ຮັບການຊຸກຍູ້ໂດຍລັດຖະບານ.*

ສໍານັກຂ່າວ AFP ລາຍງານຈາກນະຄອນຫຼວງອາແຕນ, ປະເທດເກຣັກ ເມື່ອວັນທີ 16 ກຸມພາ 2024 ວ່າ: ຖ້າຫາກກົດໝາຍດັ່ງກ່າວຖືກປະກາດໃຊ້, ເກຣັກຈະກາຍເປັນປະເທດທີ 37 ຂອງໂລກແລະເປັນປະເທດທີ່ນັບຖືສາສະໜາຄຣິດນິກາຍອໍໂທດອກ (Orthodox) ປະເທດທໍາອິດ ທີ່ຮັບຮອງການຮັບລ້ຽງລູກບຸນທໍາໂດຍຄູ່ສົມລົດເພດດຽວກັນ.

ຮ່າງກົດໝາຍດັ່ງກ່າວ ເຊິ່ງໄດ້ຮັບການສະໜັບສະໜູນຈາກພັກປະຊາທິປະໄຕໃໝ່ ຂອງທ່ານນາຍົກລັດຖະມົນຕີ ຄີເຣຍກອດ ມິດໂຊທາກິດ (Kyriakos Mitsotakis) ໄດ້ຖືກຮັບຮອງເອົາດ້ວຍຄະແນນ 176 ສຽງ ຈາກສະມາຊິກລັດຖະສະພາ 245 ທ່ານທີ່ເຂົ້າຮ່ວມກອງປະຊຸມ (ລັດຖະສະພາເກຣັກ ມີ 300 ທີ່ນັ່ງ) ພາຍຫຼັງການອະພິປາຍເປັນເວລາ 2 ວັນ.

# ທ່ານ ປູຕິນ ລົງນາມໃນກົດໝາຍອະນຸຍາດໃຫ້ຍຶດຊັບສິນຜູ້ວິຈານກອງທັບ

*ປະທານາທິບໍດີລັດເຊຍທ່ານວະລາດິເມຍ ປູຕິນ ລົງນາມບັງຄັບໃຊ້ກົດໝາຍທີ່ອະນຸຍາດໃຫ້ເຈົ້າໜ້າທີ່ ສາມາດຍຶດຊັບສິນຈາກຜູ້ທີ່ຖືກຕັດສິນວ່າມີຄວາມຜິດໃນການກ່າວປະນາມໂຈມຕີການປະຕິບັດການທາງທະຫານໃນອູແກຣນຂອງລັດເຊຍ.*

ສໍານັກຂ່າວ AFP ລາຍງານຈາກນະຄອນຫຼວງມົດສະກູ, ປະເທດລັດເຊຍ ເມື່ອວັນທີ 15 ກຸມພາ 2024 ວ່າ: ລັດຖະບານ ໄດ້ສັ່ງຫ້າມການວິພາກວິຈານການເຄື່ອນໄຫວທາງທະຫານໃນອູແກຣນແລະລົງໂທດຜູ້ທີ່ຕໍ່ຕ້ານຢ່າງເປີດເຜີຍ. ກົດໝາຍດັ່ງກ່າວ ອະນຸຍາດໃຫ້ເຈົ້າໜ້າທີ່ລັດເຊຍ ສາມາດຍຶດເງິນ, ຊັບສິນ ແລະ ສິ່ງຂອງມີຄ່າ ຂອງຜູ້ທີ່ຖືກຕັດສິນວ່າມີຄວາມຜິດໃນຂໍ້ຫາວິພາກວິຈານການເຄື່ອນໄຫວທາງທະຫານໃນອູແກຣນ.

ທ່ານ ປູຕິນ ໄດ້ລົງນາມໃນກົດໝາຍ ຫຼັງຈາກສະພາຕໍ່າ ຫຼື ສະພາດູມາ (State Duma) ຮັບຮອງຮ່າງກົດໝາຍດັ່ງກ່າວເມື່ອທ້າຍເດືອນມັງກອນຜ່ານມາ.

ທ່ານ ວະຢາເຊສະລາບ ໂວໂລດິນ (Vyacheslav Volodin) ປະທານສະພາດູມາ ກ່າວເມື່ອທ້າຍເດືອນມັງກອນຜ່ານມາວ່າ ກົດໝາຍສະບັບໃໝ່ນີ້ ແນໃສ່ "ພວກຄົນຊົ່ວ ແລະ ພວກທໍລະຍົດທີ່ດູຖູກທະຫານຂອງປະເທດ ແລະ ຫັກຫຼັງຕໍ່ບ້ານເກີດເມືອງນອນຂອງພວກເຂົາ".



# ສະພາແຫ່ງຊາດເຢຍລະມັນ ຮັບຮອງກົດໝາຍກັນຊາເສລີ, ແຕ່ມີເງື່ອນໄຂຫຼາຍຢ່າງ

*ເຢຍລະມັນ ກໍາລັງກະກຽມທີ່ຈະເປີດ "ກັນຊາເສລີ" ໃນເດືອນເມສາ, ຢ່າງໃດກໍຕາມ, ຍັງມີຫຼາຍເງື່ອນໄຂ ເພື່ອບໍ່ໃຫ້ການຊື້-ຂາຍກັນຊາງ່າຍເກີນໄປ.*

ສໍານັກຂ່າວ CNN ລາຍງານຈາກນະຄອນຫຼວງແບກແລງ, ປະເທດເຢຍລະມັນ ເມື່ອວັນທີ 24 ກຸມພາຜ່ານມາວ່າ: ສະພາແຫ່ງຊາດ ຫຼື ສະພາຕໍ່າ ເຢຍລະມັນ ມີມະຕິດ້ວຍສຽງສ່ວນຫຼາຍ 407 ສຽງ ຮັບຮອງກົດໝາຍການນໍາໃຊ້ກັນຊາເພື່ອພັກຜ່ອນຢ່ອນອາລົມ (recreational), ໂດຍມີສະມາຊິກ 226 ທ່ານ ລົງຄະແນນສຽງຄັດຄ້ານ ແລະ 4 ທ່ານ ງົດອອກສຽງ (ສະພາແຫ່ງຊາດ ມີ 735 ທີ່ນັ່ງ).

ທັງນີ້, ກົດໝາຍດັ່ງກ່າວ ຈະມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ເມສາ 2024 ເປັນຕົ້ນໄປ, ໂດຍຜູ້ມີອາຍຸຕັ້ງແຕ່ 18 ປີຂຶ້ນໄປໃນເຢຍລະມັນ ສາມາດຊື້ ແລະ ຄອບຄອງກັນຊາເພື່ອການບໍລິໂພກ ໄດ້ປະລິມານສູງສຸດບໍ່ເກີນ 25 ກຣາມຕໍ່ຄົນ, ການປູກກັນຊາໄດ້ສູງສຸດ 3 ຕົ້ນ ແລະ ການຄອບຄອງກັນຊາແຫ່ງທີ່ມີນໍ້າໜັກບໍ່ເກີນ 50 ກຣາມ.

ໃນຂະນະທີ່ເລີ່ມແຕ່ວັນທີ 01 ກໍລະກົດ 2024, ປະຊາຊົນສາມາດເຂົ້າຮ່ວມ "ສະມາຄົມ ຫຼື ສະໂມສອນກັນຊາ" ທີ່ມີສະມາຊິກບໍ່ເກີນ 500 ຄົນ ເພື່ອຮ່ວມກິດຈະກໍາການປູກ ແລະ ການຊື້ກັນຊາພາຍໃນກຸ່ມສະມາຊິກ.

ເຖິງຢ່າງໃດກໍຕາມ, ຮ້ານຄ້າ ແລະ ຫ້າງຮ້ານຕ່າງໆ ຍັງຈະບໍ່ໄດ້ຮັບອະນຸຍາດໃຫ້ຈໍາໜ່າຍກັນຊາ; ນອກຈາກນີ້, ຫ້າມມີການຊື້, ຈໍາໜ່າຍ ແລະບໍລິໂພກກັນຊາບໍລິເວນໃກ້ກັບໂຮງຮຽນອະນຸບານ, ໂຮງຮຽນ, ເດີ່ນຫຼິ້ນເດັກນ້ອຍ, ສູນກິລາ ແລະ ທາງຍ່າງ ລະຫວ່າງ 7:00 ໂມງເຊົ້າ - 8:00 ໂມງແລງ ທຸກໆມື້ ບໍ່ເວັ້ນວັນພັກລັດຖະການ.

ທ່ານ ດຣ. ຄານ ເລົາເທີບັກ (Karl Lauterbach) ລັດຖະມົນຕີກະຊວງສາທາລະນະສຸກເຢຍລະມັນສະແດງຄວາມຄິດເຫັນວ່າ: ກົດໝາຍດັ່ງກ່າວແມ່ນມີຄວາມຈໍາເປັນ ເພື່ອຄວບຄຸມສະພາບການໃນປັດຈຸບັນ ເຊິ່ງເດັກ ແລະ ເຍົາວະຊົນໃນປະເທດເຂົ້າເຖິງກັນຊາໄດ້ງ່າຍຂຶ້ນໂດຍຜ່ານຕະຫຼາດມືດ ພ້ອມທັງສະແດງຄວາມຄາດຫວັງວ່າ ເມື່ອກົດໝາຍມີຜົນບັງຄັບໃຊ້, ອັດຕາອາຊະຍາກໍາໃນເຢຍລະມັນຈະຫຼຸດລົງ.

ຢ່າງໃດກໍຕາມ, ສະມາຄົມທາງການແພດ ແລະ ຜູ້ຊ່ຽວຊານຫຼາຍຂະແໜງ ໄດ້ວິພາກວິຈານກົດໝາຍສະບັບນີ້ວ່າ ເປັນການສົ່ງເສີມໃຫ້ປະຊາຊົນເຂົ້າເຖິງກັນຊາໄດ້ງ່າຍຂຶ້ນ.



# ສອງພັກການເມືອງໃຫຍ່ຂອງປາກິດສະຖານບັນລຸຂໍ້ຕົກລົງຈັດຕັ້ງລັດຖະບານປະສົມ



ທ່ານ ເຊບາດ ຊາຣິບ

ສໍານັກຂ່າວ AFP ລາຍງານຈາກນະຄອນຫຼວງອິດສະລາມາບັດ, ປະເທດປາກິດສະຖານ ເມື່ອວັນທີ 21 ກຸມພາຜ່ານມາວ່າ: ທ່ານ ບິລາວັນ ບຸດໂຕ ຊາດາຣີ (Bilawal Bhutto Zardari) ລູກຊາຍຂອງອະດີດນາຍົກລັດຖະມົນຕີ ທ່ານ ນາງ ເບນາຊີ ບຸດໂຕ (Benazir Bhutto), ໃນຖານະປະທານພັກປະຊາຊົນປາກິດສະຖານ ຫຼື PPP (Pakistan People's Party) ໄດ້ຖະແຫຼງຢືນຢັນເຖິງການບັນລຸຂໍ້ຕົກລົງຈັດຕັ້ງລັດຖະບານກັບພັກສັນນິບາດມຸດສະລິມປາກິດສະຖານ-ນາວາດ ຫຼື PML-N (Pakistan Muslim League-Nawaz) ຂອງທ່ານ ເຊບາດ ຊາຣິບ (Shehbaz Sharif) ນ້ອງຊາຍຂອງອະດີດນາຍົກລັດຖະມົນຕີ ທ່ານ ນາວາດ ຊາຣິບ (Nawaz Sharif) ໃນການແບ່ງປັນອໍານາດທາງການເມືອງ ແລະ ສະໜັບສະໜູນທ່ານ ເຊບາດ ໃຫ້ດໍາລົງຕໍາແໜ່ງນາຍົກລັດຖະມົນຕີ; ໃນຂະນະດຽວກັນ, ທັງສອງພັກຈະສະເໜີຊື່ທ່ານ ອາຊິບ ອາລີ ຊາດາຣີ (Asif Ali Zardari) ສາມີໝ້າຍຂອງທ່ານ ນາງ ເບນາຊີ ແລະ ບິດາຂອງທ່ານ ບິລາວັນ ໃຫ້ດໍາລົງຕໍາແໜ່ງປະທານາທິບໍດີ.

ຝ່າຍທ່ານ ເຊບາດ ຜູ້ທີ່ເຄີຍດໍາລົງຕໍາແໜ່ງນາຍົກລັດຖະມົນຕີລະຫວ່າງເດືອນເມສາ 2022-ສິງຫາ 2023 ກ່ອນຈະຍຸບສະພາ ແລະ ຈັດການເລືອກຕັ້ງທົ່ວໄປກ່ອນກໍານົດ ເມື່ອວັນທີ 08 ກຸມພາຜ່ານມາ, ຢືນຢັນວ່າ ທ່ານຈະກັບຄືນມາບໍລິຫານປະເທດ ເພື່ອນໍາພາປາກິດສະຖານ ຜ່ານຜ່າສິ່ງທ້າທາຍຕ່າງໆ ໂດຍສະເພາະບັນຫາເສດຖະກິດ.

ສະພາແຫ່ງຊາດ (ສະພາຕໍ່າ) ປາກິດສະຖານ ໄດ້ເປີດກອງປະຊຸມໃນວັນທີ 29 ກຸມພາ 2024 ເພື່ອລົງຄະແນນສຽງເລືອກຕັ້ງນາຍົກລັດຖະມົນຕີ ແລະ ປະທານາທິບໍດີຄົນຕໍ່ໄປ.



ທ່ານ ບິລາວັນ ບຸດໂຕ ຊາດາຣີ

## ເຝົ້າໄວ້ ໄດ້ບົດຮຽນ

# ມາດຕະການຄຸ້ມຄອງອົງການສື່ຕ່າງປະເທດ ແລະ ກົດໝາຍໝິ່ນປະໝາດຜູ້ນຳ

❖ ວິເສດ ສະແຫວງສຶກສາ

ເລື່ອງທີ່ຢາກເວົ້າໃຫ້ຟັງ ໃນຄໍລຳປະຈຳວັນນີ້ ເປັນເລື່ອງເກົ່າເຄີຍເລົ່າມາແລ້ວຫຼາຍເທື່ອ ແລະ ຫຼາຍບ່ອນ ແຕ່ມັນເປັນເລື່ອງທີ່ໜ້າສົນໃຈ ທີ່ຄວນເບິ່ງໄວ້ຈະໄດ້ບົດຮຽນ. ມັນເປັນເລື່ອງກ່ຽວກັບມາດຕະການຄຸ້ມຄອງ ຫຼື ຖ້າເວົ້າໃຫ້ຖືກແທ້ ຄວນຈະໃຊ້ຄຳວ່າ "ຄວບຄຸມ" ແທນ "ຄຸ້ມຄອງ" ເຊິ່ງທາງການລັດເຊຍ ໄດ້ປະກາດໃຊ້ມາແຕ່ວັນທີ 25 ພະຈິກ 2017. ໃນວັນດັ່ງກ່າວ, ທ່ານ ປູຕິນ, ປະທານາທິບໍດີ ລັດເຊຍ ໄດ້ລົງລາຍເຊັນປະກາດໃຊ້ກົດໝາຍສະບັບໃໝ່ ທີ່ໃຫ້ສິດເຈົ້າໜ້າທີ່ກ່ຽວຂ້ອງຈົດທະບຽນບັນດາອົງການສື່ຕ່າງປະເທດທີ່ເຄື່ອນໄຫວໃນລັດເຊຍ ເຂົ້າບັນຊີ "ຫ້ອງການຜູ້ຕາງໜ້າຕ່າງປະເທດ". ເພື່ອຄວາມເຂົ້າໃຈຕື່ມ, ຂໍອະທິບາຍວ່າ ກ່ອນປະກາດໃຊ້ກົດໝາຍສະບັບນີ້ນັ້ນ ບັນດາອົງການສື່ຕ່າງປະເທດເຄື່ອນໄຫວໃນລັກສະນະເປັນເອກະລາດນອກບັນຊີ "ຫ້ອງການຜູ້ຕາງໜ້າຕ່າງປະເທດ" ຕົວຢ່າງ ໜ່ວຍຂ່າວ ບີບີຊີ (BBC) ກໍເຄື່ອນໄຫວເປັນເອກະລາດ ບໍ່ຂຶ້ນກັບຫ້ອງການຜູ້ຕາງໜ້າປະເທດອັງກິດ, ຊີເອັນເອັນ (CNN) ກໍເຄື່ອນໄຫວນອກຂອບບັນຊີ ຜູ້ຕາງໜ້າຂອງສະຫະລັດອາເມລິກາ ແລະ ໜ່ວຍງານຂ່າວປະເທດອື່ນໆກໍເຊັ່ນດຽວກັນ ແຕ່ພາຍຫຼັງກົດໝາຍສະບັບນີ້ອອກມາ, ອົງການຂ່າວຂອງຕ່າງປະເທດ ຕ້ອງຖືກຈົດເຂົ້າໃນບັນຊີ "ຫ້ອງການຜູ້ຕາງໜ້າຕ່າງປະເທດ" ເຊິ່ງມີລະບຽບການຄຸ້ມຄອງສະເພາະ. ເຫດຜົນທີ່ລັດເຊຍ ຕ້ອງອອກ ແລະປະກາດໃຊ້ກົດໝາຍນີ້ກໍແມ່ນເພື່ອຕອບໂຕ້ທາງການຂອງສະຫະລັດອາເມລິກາ ທີ່ໄດ້ບັງຄັບໃຫ້ຊ່ອງໂທລະພາບ RT ຂອງລັດເຊຍ ພາກພາສາອັງກິດ ປະຈຳ ສ.ອາເມລິກາ ເຄື່ອນໄຫວໃນຖານະເປັນ "ຫ້ອງການຜູ້ຕາງໜ້າຕ່າງປະເທດ". ມາດຕະການ "ແບບໝັດແລກໝັດ" ຂອງລັດເຊຍນີ້ ໜັກກວ່າຂອງສະຫະລັດຫຼາຍໂຍດ ຄືນອກຈາກບັງຄັບໃຫ້ໜ່ວຍສື່ຂ່າວຕ່າງປະເທດເຄື່ອນໄຫວໃນນາມຕາງໜ້າປະເທດຂອງຕົນແລ້ວ, ກົດໝາຍຍັງກຳນົດໃຫ້ມີການຕິດກາໝາຍໃສ່ແຕ່ລະບົດຂ່າວວ່າເປັນຂ່າວຈາກ "ຫ້ອງການຜູ້ຕາງໜ້າຕ່າງປະເທດ" ພ້ອມໆກັບຕ້ອງແຈ້ງກ່ຽວກັບແຫຼ່ງເງິນທີ່ໃຊ້ໃນການສ້າງ ແລະ ເຜີຍແຜ່ຂ່າວດັ່ງກ່າວ. ຕໍ່ມາໃນປີ 2019, ລັດເຊຍອອກກົດໝາຍໃໝ່ຕື່ມອີກສະບັບໜຶ່ງທີ່ບັງຄັບບັນດາບໍລິສັດກໍຄືນິຕິບຸກຄົນຕ່າງປະ ເທດທີ່ເຮັດທຸລະກິດບໍລິການດ້ານໂທລະສັບມືຖື ປະເພດສະມາດໂຟນ, ສະມາດທີວີ ກໍຄືຄອມພິວເຕີຕ້ອງໄດ້ລົງໂປຣແກຣມຊອບແວບາງລາຍການຂອງລັດເຊຍ. ກົດໝາຍໄດ້ກຳນົດໂທດຕໍ່ຜູ້ທີ່ບໍ່ໄດ້ລົງໂປຣແກຣມຊອບແວດັ່ງກ່າວເປັນຈຳນວນເງິນ 50.000-200.000 ຣຸບ (ເທົ່າກັບ 790-3.170 ໂດລາສະຫະລັດ ຕາມອັດຕາແລກປ່ຽນໃນປີ 2019).

ເລື່ອງຂໍເລົ່າປິດທ້າຍບົດນີ້ ແມ່ນກ່ຽວກັບກົດໝາຍຫ້າມໝິ່ນປະໝາດຜູ້ນຳຂອງປະເທດຢູ່ອິນໂດເນເຊຍເຊິ່ງເຄີຍປະຕິບັດມາເປັນເວລາຫຼາຍສິບປີແລ້ວ ແຕ່ຖືກຍົກເລີກໃນປີ 2006. ໃນປີ 2012 ໄດ້ມີກະແສຮຽກຮ້ອງຮື້ຟື້ນກົດໝາຍດັ່ງກ່າວມາໃຊ້ຄືນ ແຕ່ກໍບໍ່ສາມາດຜ່ານສະພາໄດ້ ເພາະເນື້ອໃນຂອງກົດໝາຍຍັງບໍ່ຄົບຖ້ວນຮັດກຸມ ສອດຄ່ອງ ກັບການປ່ຽນແປງຂອງຍຸກສະໄໝ. ໃນປີ 2015, ຮ່າງກົດໝາຍຫ້າມໝິ່ນປະໝາດຜູ້ນຳສະບັບປັບປຸງຈຶ່ງສາມາດຖືກຮັບຮອງເອົາໂດຍລັດຖະສະພາ ແລະ ໄດ້ເລີ່ມມີຜົນສັກສິດໃນວັນທີ 5 ສິງຫາ ປີ 2015 ນັ້ນເອງ. ທ່ານ ໂຈໂກ ວິໂດໂດ ປະທານາທິບໍດີອິນໂດເນເຊຍ ໄດ້ມີຄຳເຫັນຕໍ່ກົດໝາຍສະບັບນີ້ວ່າ: ກົດໝາຍຈະເຮັດໜ້າທີ່ຄຸ້ມຄອງທັງຜູ້ວິພາກວິຈານກ່ຽວກັບຜູ້ນຳ ແລະ ຄຸ້ມຄອງທັງຜູ້ນຳເອງທີ່ເປັນສັນຍະລັກຂອງປະເທດ. ສ່ວນໂຄສົກລັດຖະບານໃນເວລານັ້ນ ກໍໄດ້ມີຄຳເຫັນຕອກຢ້ຳກ່ຽວກັບເລື່ອງນີ້ວ່າ "ຫາກເລື່ອງວິພາກວິຈານ ຍຶດຖືຜົນປະໂຫຍດຂອງປະເທດເປັນພື້ນຖານກໍຈະບໍ່ຖືວ່າເປັນຄວາມຜິດ ແຕ່ຖ້າວິຈານ ຫຼື ໃສ່ຮ້າຍປ້າຍສີທີ່ມີລັກສະນະໝິ່ນປະໝາດຂາດຄວາມເປັນຈິງ ກໍຈະຖືວ່າເປັນການລະເມີດກົດໝາຍສະບັບນີ້". ກົດໝາຍໄດ້ກຳນົດບົດລົງໂທດຈຳຄຸກ ແລະ ປັບໃໝຕໍ່ຜູ້ກະທຳຜິດຕາມສະພາບໜັກ-ເບົາຂອງຄວາມຜິດ.

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ທະນາຄານພັດທະນາລາວ
LDB Bank




# ຂ້າໂຕຕາຍ

*# ບ່າວກະບີ*

ກິເຕີ່ນ ລ້ອນໄປໂຮງໝໍໃນຕອນຄ່ອນຄືນ. ປາຍນິ້ວກ້ອຍຂອງເຂົາຖືກລູກປືນຕັດຂາດອອກ.

"ມັນເປັນແນວໃດ?" ທ່ານໝໍປະຈຳຫ້ອງສຸກເສີນຖາມ.

"ເອີ່... ຄືລ່ຽງຊີ້ ເຮົາພະຍາຍາມຂ້າໂຕຕາຍ" ກິເຕີ່ນຕອບ.

"ແມ່ນຫຍັງເກາະ, ເຈົ້າພະຍາຍາມຂ້າໂຕຕາຍ ໂດຍໃຊ້ປືນຍິງນິ້ວມືລົບກຸດຊັ້ນບໍ ?" ທ່ານໝໍດອດສຽງຖາມ.

"ບໍ່... ບໍ່ແມ່ນແນວນັ້ນ. ເຮົາເອົາປືນຈໍ່ໃສ່ຫູເບື້ອງຂວາ ແລ້ວສະເດືອກວ່າມັນຈະເກີດສຽງດັງ ດັ່ງນັ້ນເຮົາເລີຍເອົານິ້ວມືອັດຫູອີກເບື້ອງໜຶ່ງ ກ່ອນຈະລັ່ນໄກປືນ ຊັ້ນນ່າ!".

# SUICIDE

*# BAOKBU*

Kytern hurried into the hospital late one night, with the tip of his index finger shot off.

"How did this happen?" the emergency doctor asked him. cuba room

"Well, I was trying to commit suicide" Kyternreplied.

"What?" spattered the doctor. "You tried to commit suicide by shooting your finger off?"

"No! No! No! I put the gun to my right ear and I thought: 'this is going to make a loud noise'. So I put my finger in the other ear before I pulled the trigger".

ຕາມພາສາ ກາຕູນ




● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ